# ພຣະເຈົ້າມີຈິງຫລື?
## <u>ຮູ້ໄດ້ຢ່າງໃດວ່າມີພຣະເຈົ້າ</u>

ຄວາມຈິງ 5 ປະການດັ່ງຕໍ່ໄປນີ້ຈະຊີ້ໃຫ້ທ່ານເຫັນວ່າພຣະເຈົ້າມີຈິງ.

1. ຄວາມຈິງທາງວິທຍາສາດ.
2. ຄວາມຈິງທາງທັມມະຊາດ.
3. ຄວາມຈິງທາງພຣະຄັມພີຂອງພຣະເຈົ້າ.
4. ຄວາມຈິງໃນຊີວິດຂອງມະນຸດ.
5. ຄວາມຈິງດ້ານຈິດວິນຍານຂອງຜູ້ທີ່ເຊື່ອໄດ້ພິສູດວ່າມີພຣະເຈົ້າ.

## 1.<u>ຄວາມຈິງທາງວິທຍາສາດພິສູດວ່າມີພຣະເຈົ້າ:</u>

ຈັກກະວານເກີດຂຶ້ນໄດ້ຢ່າງໃດ? ແລະສິ່ງຕ່າງໆ ໃນຈັກກະວານມາຈາກໃສ?ຕັນກະວິທຍາ(ວິຊາທີ່ວ່າດ້ວຍເຫດແລະຜົນ)ແລະຝ່າຍອັກສອນສາດໄດ້ວິເຄາະວ່າຈັກກະວານແລະສິ່ງຕ່າງໆໃນຈັກກະວານເກີດຂຶ້ນຈາກປາກົດການຂອງສິ່ງທີ່ບໍ່ມີຮູບຮ່າງ3ຢ່າງຄືຄວາມຈິງ,ຄວາມງາມ,ແລະຄວາມຊອບສາມສິ່ງນີ້ເປັນອະຮູບເພາະວ່າບໍ່ມີຮູບຮ່າງ.

ຄຳອະທິບາຍດັ່ງກ່າວຂ້າງເທິງນີ້ພຽງແຕ່ເປັນຄວາມຄິດເພື່ອຈະຫລີກເວັ້ນບໍ່ຢາກເອີ່ຍຄຳວ່າ"<u>ພຣະເຈົ້າ</u>"ພວກເຮົາຄິດວ່າແມ່ນຫຍັງແມ່ນຄວາມຈິງ,ແລະແມ່ນຫຍັງແມ່ນຄວາມງາມ,ແມ່ນຫຍັງແມ່ນຄວາມຊອບ,ແມ່ນຫຍັງສະແດງອອກໃນທັສນະທີ່ວ່າຈິງ,ວ່າງາມ,ວ່າຊອບ.ຄວາມຈິງຈະຕ້ອງເກີດມາຈາກຂອງຈິງບໍ່ວ່າຈະເປັນຮູບຫລືອະຮູບ,ຄວາມງາມ,ແລະຄວາມຊອບຕ້ອງເປັນຜົນອອກມາຈາກຄວາມຈິງທຸກປະການຄືມາຈາກພຣະເຈົ້າເພາະຜົນທີ່ເຫັນເປັນຈິງມີເຫດຜົນທີ່ມະນຸດບໍ່ສາມາດຈະເຂົ້າໃຈໄດ້ໝົດທຸກສິ່ງດ້ວຍສະຕິປັນຍາອັນຈຳກັດຂອງມະນຸດແຕ່ມີບາງສ່ວນທີ່ມະນຸດສາມາດເຫັນຄວາມຈິງໄດ້ຄືໃນຮູບທັມແລະນາມທັມອັນເປັນປາກົດການໃນຈັກກະວານທັງຮູບແລະອະຮູບຄວາມຈິງນັ້ນຄື ພຣະເຈົ້າໄດ້ສຳແດງຣິດທານຸພາບ ຊົງບັນດານໃຫ້ເກີດສະພາບໃນຈັກກະວານສະແດງຜົນເປັນຄວາມງາມ,ຄວາມຊອບ, ໃນແບບທີ່ມີຮູບຮ່າງ.ວິທຍາສາດຝ່າຍຟີຊິກວິເຄາະວ່າຈັກກະວານຈະຕ້ອງເປັນຂຶ້ນມາໂດຍພະລັງງານຈາກການນິຣະມິດຢ່າງແນ່ນອນໂດຍວິນິສັຍວ່າເປັນອຸບັດຈັກກະວານຄືເກີດຂຶ້ນໃນທັນທີທັນໃດບໍ່ແມ່ນວິວັທນາການທີ່ຄ່ອຍໆເປັນໄປ.

ຄຳຕອບເຣື່ອງຈັກກະວານທາງຟີຊິກຕອບວ່າຈັກກະວານບໍ່ໄດ້ເກີດມາຈາກຈຸດນິວເຄລັຽນ້ອຍໆແລ້ວຄ່ອຍໆວິວັທນາການຂຶ້ນມາຕາມລຳດັບຕາມການເວລາແລະດ້ວຍການປ່ຽນແປງໄປເລື້ອຍໆຕາມວິທີທີ່ເອີ້ນກັນວ່າຄ່ອຍເປັນຄ່ອຍໄປແຕ່ເປັນການອຸບັດຂຶ້ນໃນຣະບົບພະລັງງານຄືການນິຣະມິດໃຫ້ເກີດຂຶ້ນໃນທັນທີທັນໃດ.

ທິສດີຂອງວິທຍາສາດຝ່າຍພຶກສາສາດແລະສັຕວະສາດໄດ້ຂໍ້ມູນຈຸດເລີ້ມຕົ້ນຂອງຈັກກະວານມາຈາກພຣະຄັມພີ. ວິທຍາສາດຝ່າຍທໍຣະນີວິທຍາ, ວິທຍາສາດທາງຄະນິດສາດເຊັ່ນກົລສາດກ່າວວ່າກົດການເຄື່ອນທີ່ຂອງນິວເຕີນຂໍ້ນຶ່ງກ່າວໄວ້ວ່າວັດຖຸຈະຍັງຄົງຢູ່ໃນສະພາບທີ່ຢຸດນິ່ງຫລືສະພາບເຄື່ອນທີ່ອັນສມ່ຳສເມີຕລອດໄປ ຖ້າບໍ່ມີແຮງຈາກພາຍນອກມາຜັກດັນຊຸກຍູ້ວັດຖຸນັ້ນ ທ່ານໄດ້ເຫັນແຈ່ມແຈ້ງແລ້ວບໍ່ແມ່ນຫລືວ່າ ຄວາມອັສຈັນຂອງຈັກກະວານຕາມກົດການເຄື່ອນທີ່ຂອງນິວເຕີນຕາເວັນ,ໂລກ,ເດືອນແລະດາວທີ່ໝູນຮອບຕົວເອງຢູ່ໃນຈັກກະວານອັນເປັນມູນຖານຂອງການປ່ຽນແປງການເຄື່ອນທີ່ງເກີດຈາກພະລັງງານຕົ້ນເຫດຂອງພະລັງງານຄືຫຍັງ?ມີບາງຄົນຄິດວ່າການໝູນຮອບຕົວເອງຂອງຕາເວັນ,ໂລກ,ເດືອນ,ແລະດາວໃນທ້ອງຟ້າເກີດຂຶ້ນເອງ.ຖ້າທຸກສິ່ງເກີດຂຶ້ນເອງໂດຍບັງເອີນທຸກສິ່ງກໍຂາດຄວາມໝາຍບໍ່ມີປໂຍດແກ່ກັນແລະກັນ.ຖ້າລົມບັງເອີນພັດຈອກຕົກແຕກລົມກໍບໍ່ມີຄວາມໝາຍຈອກທີ່ຕົກແຕກກໍບໍ່ມີຄວາມໝາຍການເກີດຂຶ້ນໂດຍປາສຈາກຄວາມໝາຍເອີ້ນວ່າບັງເອີນ.ຖ້າທ່ານຍ່າງໄປຕຳເສົາໄຟຟ້າໂດຍທີ່ບໍ່ໄດ້ຕັ້ງ

ໃຈກໍບໍ່ມີຄວາມໝາຍແຕ່ຖ້າທ່ານຫາກຕັ້ງໃຈຕໍາຄວາມໝາຍກໍຍ່ອມມີແນ່ນອນ.

ຫລັກຖານທາງພຣະຄັມພີໃນພຣະທັມເອຊາຢາບົດທີ42ຂໍ້5ກ່າວວ່າພຣະເຈົ້າພຣະເຢໂຮວາຜູ້ຊົງສ້າງຟ້າສວັນ, ແຜ່ນດິນໂລກ,ແລະສິ່ງທີ່ບັງເກີດຈາກໂລກຜູ້ຊົງປະທານລົມຫາຍໃຈແກ່ບັນດາມະນຸດແລະຈິດວິນຍານແກ່ຜູ້ດໍາເນີນຊີວິດຢູ່ເທິງໂລກພຣະອົງຊົງຊອບພຣະທັຍໃນສິ່ງທີ່ພຣະອົງຊົງສ້າງ.

ທ່ານຫລຸຍສ໌ປັສເຕີນັກວິທຍາສາດຜູ້ຍິ່ງໃຫຍ່ປີ1822-1895 ໄດ້ກ່າວວ່າເມື່ອຂ້າພະເຈົ້າໄດ້ພິຈາຣະນາເບິ່ງທັມຊາດຂ້າພະເຈົ້າຮູ້ສຶກອັສຈັນໃຈໃນພຣະຣາຊກິຈຂອງພຣະເຈົ້າຜູ້ຊົງນິຣະມິດສ້າງທີ່ໄດ້ສ້າງສິ່ງທັງປວງໄວ້.

ເຖິງວິຊາວິທຍາສາດຈະພະຍາຍາມຫາຄວາມຈິງມາລົບລ້າງເຣື່ອງພຣະເຈົ້າແຕ່ກໍຍິ່ງເຮັດໃຫ້ເຣື່ອງຂອງພຣະເຈົ້າແຈ່ມແຈ້ງຫລາຍຂຶ້ນແລະກາຍເປັນສິ່ງທີ່ພິສູດໃຫ້ເຫັນວ່າມີພຣະເຈົ້າ.ໃນພຣະທັມໂຢບບົດທີ37ຂໍ້14ກ່າວເຕືອນມະນຸດທີ່ບໍ່ເຂົ້າໃຈພຣະເຈົ້າເມື່ອຫລຽວເບິ່ງທັມຊາດວ່າ.....ຈົ່ງພັກຈັກໜ່ອຍນຶ່ງຈົ່ງຟັງເຮົາຕໍ່ໄປຈົ່ງພິຈາຣະນາເບິ່ງສິ່ງອັສຈັນທີ່ພຣະເຈົ້າຊົງກະທໍານັ້ນທ່ານໂຢບພຽງແຕ່ຢາກໃຫ້ມະນຸດເບິ່ງອະວັຍວະໃນຮ່າງກາຍຂອງຕົນອັນເຕັມໄປດ້ວຍຄວາມອັສຈັນພຽງແຕ່ເບິ່ງມືຂອງເຮົາເອງວ່າເປັນຫຍັງຈຶ່ງເປັນຢ່າງນີ້ເຮົາຜູ້ມີສະຕິປັນຍາກໍຈະຮູ້ຈັກກັບພຣະເຈົ້າໄດ້.

ຂໍໃຫ້ທ່ານຖາມຜູ້ໃດຜູ້ນຶ່ງພຽງແຕ່ຄໍາດຽວວ່າເປັນຫຍັງເຮົາຈຶ່ງມີສອງຕາ  ອາດຈະມີຄົນຕອບວ່າມັນເກີດມາເອງແລະຕາທັງສອງໜ່ວຍນີ້ຈະເອົາໄວ້ບ່ອນໃດທີ່ເຫັນວ່າເໝາະສົມກວ່າບ່ອນທີ່ມັນຢູ່ດຽວນີ້  ທ່ານຈະຕອບວ່າແນວໃດ?

## ໒. <u>ຄວາມຈິງທາງທັມຊາດພິສູດວ່າມີພຣະເຈົ້າ</u>

ໃນຣະບົບສຸຣິຍະຈັກກະວານມີຕາເວັນບໍ່ເກີນນຶ່ງໜ່ວຍຖ້າຕາເວັນຫາກມີຫລາຍກວ່ານຶ່ງໜ່ວຍ  ສັດ,ພືດ, ແມ່ນແຕ່ຈຸຣິນຊີ (ສັດຊະນິດນ້ອຍ) ຈະຕາຍໝົດແລະຖ້າຫາກບໍ່ມີຕາເວັນຈັກໜ່ວຍເລີຍ  ໂລກນີ້ກໍຈະເປັນເໝືອນກັບເດືອນແລະດາວພະເຄາະໜ່ວຍອື່ນໆ. ຕາເວັນເປັນແຫລ່ງໃຫ້ພະລັງງານແລະແສງສວ່າງແກ່ສັດແລະພືດຊຶ່ງເຫັນວ່າເປັນປໂຍດອັນໃຫຍ່ຫລວງເພາະວ່າມີພຽງແຕ່ໜ່ວຍດຽວ.ກົດເກນດັ່ງກ່າວນີ້ມາຈາກໃສທ່ານຈະຫາຄໍາຕອບຈົນໂລກແຕກສລາຍໄປກໍຍັງຈະບໍ່ພົບກັບຄໍາຕອບອັນເພິ່ງພໍໃຈນອກຈາກທ່ານຈະສລຸບເອົາວ່າມັນເກີດຂຶ້ນມາເອງ.

ເດືອນທີ່ເປັນບໍຣິວານຂອງໂລກນີ້ມີພຽງໜ່ວຍດຽວຄໍາວ່າເປັນບໍຣິວານນັ້ນໝາຍເຖິງເປັນປໂຍດແກ່ກັນແລະກັນ, ມີຄວາມສັມພັນກັນ.  ເດືອນບໍ່ມີຄວາມໝາຍສໍາລັບດາວພະເຄາະໜ່ວຍອື່ນເດືອນໄດ້ຊ່ອຍໃຫ້ໂລກມີຄວາມເຢັນ, ຊຸ່ມຊື່ນ,ສໍາຫລັບສິ່ງທີ່ມີຊີວິດມະນຸດ,ສັດແລະພືດ.ເດືອນເປັນຕົວກໍານົດການປ່ຽນແປງຂອງລະດູການແລະອຸນນະພູມຂອງໂລກຖ້າເດືອນມີຫລາຍກວ່ານຶ່ງໜ່ວຍສັດແລະພືດກໍຈະສູນເຜົ່າພັນໄປເພາະທົນຕໍ່ຄວາມໜາວບໍ່ໄດ້.ໂລກນີ້ກໍຈະກາຍເປັນໜ່ວຍນໍ້າກ້ອນຂນາດໃຫຍ່ມະຫຶມາເປັນຫຍັງເດືອນຈຶ່ງມີພຽງແຕ່ໜ່ວຍດຽວ?ກົດເກນນີ້ມີຈາກໃສ?

ໂລກທີ່ພຣະເຈົ້າຊົງນິຣະມິດສ້າງໄວ້ນີ້ເຖິງທ່ານຈະຄັດຄ້ານວ່າມັນແຕກອອກມາຈາກຕາເວັນກໍຕາມການທີ່ຈະເວົ້າວ່າໝໍ້ດິນໜ່ວຍນີ້ແຕກອອກມາຈາກດິນ,  ຫລືຣົດຍົນຄັນນີ້ແຕກອອກມາຈາກໂຮງຫລໍ່ເຫຼັກຫລືມາຈາກພື້ນດິນ, ກວຽນຄັນນີ້ແຕກອອກມາຈາກປ່າໄມ້, ຫລືບ້ານຂອງຂ້າພະເຈົ້າແຕກອອກມາຈາກປ່າໄມ້,ໂຕະຕັ່ງອີ້ແລະຕູ້ໃສ່ເສື້ອຜ້າຂອງຂ້າພະເຈົ້າແຕກອອກມາຈາກທ່ອນໄມ້ກໍດີ.ຖ້າສະຕິຂອງເຮົາຍັງສົມບູນດີແນ່ນອນເຮົາຄົງຈະບໍ່ເວົ້າໃນທໍານອງນີ້.

ໃຫ້ເຮົາຫລຽວເບິ່ງໂລກນີ້ໂດຍປຽບທຽບໃສ່ກັບດາວພະເຄາະທັງຫລາຍດາວເຫລົ່ານັ້ນທ່ານກໍແນ່ໃຈວ່າມັນແຕກອອກມາຈາກຕາເວັນບໍ່ແມ່ນຫລື.ແຕ່ມັນແຕກຕ່າງກັບໂລກນີ້ຢ່າງໃດແດ່ ໂລກນີ້ມີທຸກສິ່ງທີ່ດາວໜ່ວຍອື່ນໆບໍ່ມີແລະດາວໜ່ວຍອື່ນໆບໍ່ມີສິ່ງທີ່ໂລກນີ້ມີຄືສັດ,ພືດ, ນໍ້າ, ອາກາດ, ອຸນນະພູມທີ່ແນ່ນອນຄວາມອົບອຸ່ນແລະຄວາມເຢັນອັນຊຸ່ມຊື່ນຢູ່ໃນໂລກນີ້ມີຢູ່ຢ່າງໜ້າອັສຈັນແລະສິ່ງສໍາຄັນທີ່ສຸດນັ້ນແມ່ນພຣະເຈົ້າຊົງສ້າງມະນຸດໄວ້ສໍາຫລັບຖວາຍກຽດແກ່ພຣະອົງ, ເພື່ອປົກຄອງສັພສິ່ງທີ່ພຣະອົງໄດ້ຊົງສ້າງໄວ້, ແລະເພື່ອໃຫ້ມະນຸດມີຄວາມຜາສຸກ.ພຣະເຈົ້າຊົງສົນພຣະທັຍໂລກນີ້ເປັນພິເສດ  ເພາະພຣະອົງຊົງສ້າງມະນຸດຂຶ້ນມາໃນແບບພິເສດກວ່າສິ່ງໃດໆ ໃນຈັກກະວານ  ໂດຍສະເພາະແລ້ວມະນຸດມີຈິດວິນຍານແລະມີຮູບຮ່າງທີ່ມາຈາກພຣະລັກສະນະຂອງພຣະອົງ  ເພື່ອມະນຸດຈະສາມາດສັມຜັດ

ແລະມີຄວາມສັມພັນກັບພຣະອົງໄດ້.

ໂລກໃຊ້ເວລາໝູນຮອບຕົວເອງ 24 ຊົ່ວໂມງນັບແຕ່ວັນຊົງສ້າງຈົນເຖິງປັດຈຸບັນນີ້.ແນ່ນອນ,ບໍ່ມີກຳນົດເວລາໃດທີ່ຈະໄວເກີນໄປນອກຈາກກົດເກນທີ່ພຣະເຈົ້າວາງໄວ້ໃຫ້ມັນໝູນຢູ່ແລະຕັ້ງຢູ່ໃນຄວາມງ່ຽງ15ອົງສາຄວບຄຸມໂດຍຣະບົບອັຕໂນມັດ. ຖ້າໂລກນີ້ໝູນໄວກວ່ານີ້ອີກນຶ່ງເທົ່າແຮງດຶງດູດຈະປ່ຽນແປງແລະເສັຽການຊົງຕົວໄປຖ້າໂລກໝູນໄວກວ່ານີ້ອີກ3ເທົ່າການດຶງດູດຈະຄວບຄຸມວັດຖຸຕ່າງໆແລະນ້ຳໃນທະເລໄວ້ບໍ່ໄດ້ ນ້ຳຈະໄຫລອາບໂລກໄປທົ່ວທຸກສາຣະທິດ, ຖ້າໂລກນີ້ໝູນໄວເຖິງ17 ເທົ່າຄືໝູນຮອບຕົວເອງໃນ 1 ຊົ່ວໂມງ 24 ນາທີກັບເສດອີກພຽງສອງສາມວິນາທີ, ທຸກສິ່ງທຸກຢ່າງທີ່ຢູ່ເທິງໂລກຈະຟົ້ງກະເດັນອອກໄປ ແຮງໂນ້ມນ້າວດຶງດູດທັງໝົດຂອງໂລກຈະສູນເສັຽໄປ. ໂລກຈະກາຍເປັນກຳລັງຜັກດັນຊຸກຍູ້ໃຫ້ທຸກສິ່ງຟົ້ງອອກໄປສິ່ງທີ່ມີນ້ຳໜັກຈະພຸ່ງເຂົ້າສູ່ຫ້ວງອາວະກາດຫ້ວງອາວະກາດກໍຈະເຕັມໄປດ້ວຍອັນຕະລາຍຈາກວັດຖຸທີ່ຟົ້ງອອກໄປຈາກໂລກ.ຖ້າໂລກນີ້ບໍ່ມີນ້ຳໃນມະຫາສມຸດເຕັມຢູ່,ໂລກຈະເປັນໂລກທີ່ໜ້າຢ້ານກົວຍິ່ງກວ່າດາວພະເຄາະໜ່ວຍອື່ນໆໃນຈັກກະວານເພາະວ່າຫລຸມທີ່ເປັນເຫມືອນເຫວເລິກຂອງໂລກທີ່ເປັນທະເລຈະເປັນໂລກທີ່ໂກນເປັນເຫວເລິກແລະແວ່ງ.ຈອມພູທັງຫລາຍຈະສູງທຽມຟ້າ.ໂລກນີ້ຈະເປັນໜ້າຢ້ານກົວຫລາຍຂຶ້ນ,ແລະໂລກນີ້ກໍຈະບໍ່ເປັນໜ່ວຍກົມດັ່ງທີ່ພວກເຮົາເຫັນຢູ່ທຸກວັນນີ້.

ສາຍເຫດທີ່ໂລກກົມແລະໜ້າຮັກຢູ່ນີ້ກໍເພາະມີນ້ຳເຕັມບໍຣິບູນໃນມະຫາສມຸດ, ໃນທະເລ,ແລະໃນບ່ອນຫລຸບບ່ອນໂກນແລະບ່ອນແວ່ງທັງປວງ. ໂລກອັນສວຍງາມ,ກົດເກນການໂນ້ມນ້າວ, ການຊົງຕົວແລະຄວາມສັມພັນຂອງທັມຊາດເຫລົ່ານີ້ແມ່ນສິພຣະທັດຂອງພຣະຜູ້ເປັນເຈົ້າຊຶ່ງເກີນກວ່າສະຕິປັນຍາອັນຈຳກັດຂອງມະນຸດຈະຢັ່ງຮູ້ພຣະປະສົງຂອງພຣະອົງໄດ້.

ໂລກທີ່ຕັ້ງງ່ຽງ15 ອົງສາໝູນຮອບຕົວເອງ 24 ຊົ່ວໂມງຕໍ່ 1 ຮອບຫລືຕໍ່1 ວັນ.ນ້ຳທີ່ຂົ້ວໂລກເໜືອບໍ່ເຄີຍໄຫລອາບລົງມາຖ້ວມຂົ້ວໂລກໃຕ້, ແລະນ້ຳໃນມະຫາສມຸດບໍ່ເຄີຍຖ້ວມລົ້ນເທິງແຄມຝັ່ງຟາກໃດຟາກນຶ່ງດ້ວຍຄວາມງ່ຽງຂອງໂລກ.ຜູ້ໃດເປັນຜູ້ວາງກົດເກນທີ່ແນ່ນອນໄວ້ສຳລັບທັມຊາດເຫລົ່ານີ້.ໃນພຣະທັມເພງສັຣເສີນບົດ104 ຂໍ້ 6 ກ່າວໄວ້ວ່າພຣະອົງຊົງໃຫ້ມະຫາສມຸດຫຸ້ມຫໍ່ມັນເຫມືອນດັ່ງເສື້ອຜ້າຫຸ້ມຫໍ່ຮ່າງກາຍແລະໃຫ້ນ້ຳຢູ່ເທິງພູທັງຫລາຍຂໍ້9ກ່າວວ່າພຣະອົງຕັ້ງເຂດແດນໄວ້ນ້ຳກໍບໍ່ສາມາດໄຫລຜ່ານເຂົ້າມາໄດ້ເພື່ອບໍ່ໃຫ້ນ້ຳນັ້ນໄຫລຖ້ວມແຜ່ນດິນໂລກນີ້ອີກ.

ໃນພຣະທັມໂຢບບົດທີ 38 ຂໍ້ 31 ພຣະເຈົ້າກ່າວເຕືອນມະນຸດເປັນຄຳຖາມວ່າ?ເຈົ້າບໍທີ່ມັດດາວລູກໄກ່ໃຫ້ເປັນກຸ່ມ? ຫລືເຈົ້າແກ້ເຄື່ອງຜູກດາວໄຖໄດ້ບໍ່? ຂໍ້ 36 ໃຜບອກນົກກຸລາມັນຈຶ່ງຮູ້ວ່າແມ່ນ້ຳໄນລ໌ຈະຖ້ວມຫລືໃຜບອກໄກ່ຜູ້ມັນຈຶ່ງຮູ້ວ່າຝົນຈະຕົກ? ບົດທີ26 ຂໍ້ 7 ພຣະເຈົ້າຊົງພີທ້ອງຟ້າອອກສູ່ທາງທິດເຫນືອແລະໄດ້ແຂວນແຜ່ນດິນໂລກເຮົາໄວ້ໃນບ່ອນທີ່ວ່າງເປົ່າຖ້ອຍຄຳອັນອັສຈັນວ່າໂລກຖືກແຂວນໄວ້ເໜືອທີ່ວ່າງເປົ່າຜູ້ຂຽນພຣະຄັມພີຮູ້ໄດ້ຢ່າງໃດ? ນີ້ຄືການຊົງບັນດົນອັນໜ້າອັສຈັນຫລາຍ.ຂໍ້ຄວາມໃນພຣະຄັມພີອັນມີຄວາມສຳຄັນກ່ຽວກັບບັນຫາຂອງໂລກແລະຈັກກະວານໄດ້ເປີດເຜີຍໃຫ້ມະນຸດຮູ້ຈັກກົດຂອງທັມຊາດອັນມີຄວາມໝາຍທີ່ພຣະເຈົ້າໄດ້ຊົງວາງໄວ້, ແລະຊົງສຳແດງໄວ້ໃນທັມຊາດທຸກສິ່ງມີຄວາມສັມພັນຊຶ່ງກັນແລະກັນເກີນທີ່ມະນຸດຈະເຂົ້າໃຈໄດ້.

ອີກຄຳຖາມນຶ່ງທີ່ບໍ່ມີໃຜຕອບໄດ້ຢ່າງຖືກຕ້ອງນັ້ນໄດ້ແກ່ເປັນຫຍັງຄົນເຮົາຈຶ່ງມີສອງຕາ, ສອງຫູ, ສອງຮູດັງແລະມີປາກດຽວ,ເປັນຫຍັງຈຶ່ງເປັນຢ່າງນີ້?ເພື່ອຫຍັງ?ຍ້ອນຄວາມຈິງນີ້ແຫລະທ່ານຈຶ່ງຈະຮູ້ຈັກພຣະເຈົ້າໄດ້ໂດຍຜົນງານທີ່ພຣະອົງຊົງສຳແດງໃນທັມຊາດເຫລົ່ານີ້ຊຶ່ງເອີ້ນວ່າສິພຣະທັດ.ການຊົງສຳແດງໃນທັມຊາດເປັນສິ່ງທີ່ພິສູດໃຫ້ເຫັນວ່າມີພຣະເຈົ້າ.

## 3. ຄວາມຈິງໃນພຣະຄັມພີພິສູດໃຫ້ເຫັນວ່າມີພຣະເຈົ້າ:

ພຣະຄັມພີເປັນພຣະຄຳຂອງພຣະເຈົ້າ.ເປັນຫລັກຖານສຳຄັນວ່າມີພຣະເຈົ້າພຣະຄັມພີເປັນສິ່ງອັສຈັນເກີນກວ່າທີ່ມະນຸດຈະຢັ່ງຮູ້ເອງໄດ້. ພຣະຄັມພີບັນທຶກຄວາມຈິງທີ່ແນ່ນອນ, ບໍ່ໄດ້ຫລີກລ້ຽງ, ບໍ່ໄດ້ໃຊ້ຖ້ອຍຄຳອັນໂລເລຫລືສະແດງຄວາມສົງສັຍໄວ້ແມ່ນແຕ່ຄຳດຽວ.ຖ້ອຍຄຳໃນການຂຽນພຣະຄັມພີບໍ່ໄດ້ຢ້ານກົວຕໍ່ທັສນະໃດໆຂອງໂລກບໍ່ຢ້ານ

ວ່າຈະຖືກໂລກຈະລຶບລ້າງຄວາມຈິງໃຫ້ໝົດໄປຍິ່ງທາງໂລກທຳການຕໍ່ສູ້ກໍຍິ່ງເຮັດໃຫ້ພຣະຄັມພີກະຈ່າງແຈ້ງຍິ່ງຂຶ້ນ.

ພຣະຄັມພີເປັນຈຸດເລີ້ມຕົ້ນຂອງວິທຍາສາດເພາະວ່າພຣະຄັມພີເປັນມູນຖານແຫ່ງຄວາມຄິດໃນແງ່ຕ່າງໆຂອງມະນຸດ.ມະນຸດໄດ້ໃຊ້ພຣະຄັມພີເປັນເຄື່ອງພິສູດໃນສາຂາວິຊາການຕ່າງໆຈົນພົບເຫັນໃນສິ່ງໃໝ່ໆ,ແລ້ວມະນຸດອອ້າຍກັບມາປະຕິເສດພຣະຄັມພີໂດຍຍຶດເອົາຫລັກຄວາມຄິດໃໝ່ໆ ມະນຸດໃຊ້ຄວາມຄິດເຫັນໃໝ່ຂອງຕົນເປັນເຄື່ອງປິດບັງພື້ນຖານຄວາມເຊື່ອດັ້ງເດີມຂອງຕົນ.ເຊັ່ນຊາລສ໌ດາຣ໌ວິນໄດ້ອ່ານພຣະຄັມພີພົບວ່າພຣະເຈົ້າສ້າງມະນຸດຂຶ້ນມາລາວກໍໃຊ້ພຣະຄັມພີຂໍ້ນີ້ເປັນມູນຖານເພື່ອວິນຫາທາງອອກສຳລັບຕົນເອງແລະສລູບເອົາວ່າ ມະນຸດມາຈາກລີງ. ໂດຍບໍ່ຍອມຮັບຄວາມເປັນມະນຸດຂອງຕົນວ່າມີຕົ້ນຕໍມາຈາກພຣະເຈົ້າ.

ທ່ານຜູ້ອ່ານທ່ານມີຄວາມເຕັມໃຈວ່າທ່ານເປັນເຜົ່າພັນຂອງລີງແທ້ຫລື?ຫລືທ່ານຈະເຕັມໃຈຍອມຮັບວ່າທ່ານເກີດມາຈາກຄົນໂດຍທີ່ພຣະເຈົ້າຊົງເປັນຜູ້ສ້າງ, ຢ່າງໃດທີ່ເປັນກຣດແກ່ມະນຸດຫລາຍກວ່າກັນ, ພຣະຄັມພີປະຖົມມະການຂໍ້ທຳອິດໃນໜ້າທຳອິດໄດ້ບັນທຶກເຖີງການເວລາແຫ່ງການເລີ້ມຕົ້ນໄວ້ວ່າ,ເມື່ອຕົ້ນເດີມນັ້ນພຣະເຈົ້າໄດ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ.ອັນເປັນແນວທາງຂອງວິທຍາສາດຂແນງທໍຣະນີວິທຍາວ່າໂລກນີ້ໄດ້ເກີດມາດົນນານແລ້ວ. ດັ່ງນັ້ນພຣະຄັມພີຈຶ່ງເປັນພຣະຄັມພີແຫ່ງວິທຍາສາດອັນອັສຈັນຄືເປັນທັງວິທຍາສາດແລະເລິກລັບຍິ່ງກວ່າວິທຍາສາດ. ຕໍ່ໄປນີ້ທ່ານຈະໄດ້ເຫັນພາບແຫ່ງການຊົງສ້າງຈັກກະວານແລະສັພທຸກສິ່ງທີ່ຢູ່ໃນຈັກກະວານ. ຊຶ່ງພິສູດໃຫ້ເຫັນວ່າມີພຣະເຈົ້າຜູ້ຊົງສ້າງໂດຍລຽງດຳລັບເປັນໄລຍະເວລາ6 ວັນຈຶ່ງສຳເຣັດເສັດສິ້ນໃນການຊົງນິຣະມິດສ້າງແລະຣວມທັງວັນທີ່ຊົງທອດພຣະເນດພຣະຣາຊກິດທີ່ຊົງສ້າງເປັນວັນທີ7. ການຊົງສ້າງໃຊ້ເວລາພຽງສັ້ນໆແຕ່ສິ່ງທີ່ຊົງສ້າງນັ້ນຍັງຢູ່ຖາວອນເປັນນິດໃນເວລາອັນຍາວນານຈົນເຖີງປັດຈຸບັນນີ້ກໍຍັງບໍ່ມີທິສດີໃດໆຈະລົບລ້າງຂໍ້ຄວາມໃນພຣະຄັມພີໄດ້ແມ່ນແຕ່ຂໍ້ດຽວ.(ກະຣຸນາອ່ານພຣະຄັມພີປະຖົມມະການບົດທີ1 ເພື່ອອ້າງອີງ )

ວັນທີ1 ຊົງນິຣະມິດສ້າງຈັກກະວານແລະແຜ່ນດິນໂລກໃນຫ້ອງຈັກກະວານມີແຕ່ຄວາມມືດອັນໜາປົກຄຸມຢູ່. ພຣະເຈົ້າໄດ້ນິຣະມິດໃຫ້ເກີດຄວາມສວ່າງຂຶ້ນໂດຍການຕັສສັ່ງຄວາມສວ່າງທີ່ເກີດຂຶ້ນນັ້ນເປັນຄວາມສວ່າງທີ່ບໍ່ແມ່ນມາຈາກຕາເວັນແຕ່ເອີ້ນວ່າຄວາມສວ່າງທີ່ພຣະເຈົ້າຊົງສ້າງຂຶ້ນ.

ວັນທີ2 ຊົງສ້າງບັນຍາກາດແລະແຍກນ້ຳອອກຈາກກັນ.ພຣະເຈົ້າຊົງຕັສສັ່ງໃຫ້ມີວົງໂຄ້ງຂັ້ນກາງເພື່ອແຍກນ້ຳອອກຈາກກັນເປັນສອງສ່ວນ.

ວັນທີ 3 ຊົງນິຣະມິດໃຫ້ນ້ຳບັນຈຸເຂົ້າຫລຸມໃຫຍ່ທີ່ຫລຸບ,ໂກນ,ແລະແວ່ງຂອງໂລກຊຶ່ງເປັນໜ້າຢ້ານກົວຫລາຍຖ້າຫາກບໍ່ມີນ້ຳທີ່ເອີ້ນວ່າມະຫາສມຸດຖົມໄວ້.ພຣະເຈົ້າໄດ້ຕັສສັ່ງໃຫ້ນ້ຳທີ່ຢູ່ໃຕ້ຟ້າມາຣວມເຂົ້າໃນບ່ອນດຽວກັນຊົງໃຫ້ມີບ່ອນແຫ້ງປາກົດຂຶ້ນກໍເປັນດັ່ງນັ້ນ.ພຣະເຈົ້າຊົງຕຽມນ້ຳໄວ້ຫລາຍພໍທີ່ຈະໃຊ້ລ້ຽງໂລກ,ສັດ,ແລະພືດແລະຊົງໃຫ້ແສງແດດເຜົາໃຫ້ຮ້ອນແລ້ວກາຍເປັນອາຍແລະກາຍເປັນນ້ຳຝົນຢູ່ໃນຊັ້ນບັນຍາກາດທີ່ຊົງຕຽມໄວ້ໃນວັນທີ2ເພື່ອຕົກລົງມາສູ່ໂລກໃຫ້ຊຸ່ມເຢັນ. ໃນວັນນີ້, ພຣະເຈົ້າຊົງນິຣະມິດພືດພັນນາໆຊະນິດທີ່ມີເມັດແລະຕົ້ນໄມ້ນາໆຊະນິດທີ່ມີໝາກຕາມຊະນິດຂອງມັນ.

ໃນຂໍ້ນີ້ເມື່ອມີແຜ່ນດິນ, ມີຄວາມສວ່າງ, ມີອາກາດ , ມີນ້ຳ, ແລະມີພືດຕາມລຳດັບໃນຊ່ວງໄລຍະນີ້ໂລກກໍເໝືອນກັບແອນ້ອຍຫລືເບັ້ຽແນວປູກທີ່ຢູ່ໃນດິນທີ່ຍັງບໍ່ໄດ້ຮັບພະລັງງານຈາກແສງແດດເພາະວ່າຍັງບໍ່ມີຕາເວັນເທື່ອ. ທ່ານຢ່າປລາດໃຈໃນເຣື່ອງນີ້ ເມື່ອເຮົາປູກພືດທຸກວັນນີ້ຕອນເລີ້ມຕົ້ນນັ້ນເຮົາບໍ່ຕ້ອງການໃຫ້ແສງແດດຖືກພືດເທື່ອ. ເຮົາຕ້ອງໃຊ້ເຄື່ອງປົກບັງແສງແດດໄວ້ຈົນກວ່າພືດນັ້ນງອກແລະເຕີບໃຫຍ່ຂຶ້ນພໍທີ່ຈະຮັບແສງແດດໄດ້ເຮົາຈຶ່ງໃຫ້ພືດຖືກແສງແດດດ້ວຍຄວາມລະມັດລະວັງ. ເປັນໜ້າອັສຈັນໃຈຫລາຍທີ່ພຣະເຈົ້າຊົງສ້າງພຽງແຕ່ຄວາມສວ່າງຂຶ້ນດ້ວຍຣະບົບແສງສວ່າງ, ນ້ຳ, ແລະອາກາດແລ້ວກໍປູກພືດໃສ່ຕໍ່ມາພຣະອົງກໍໃຫ້ພືດໄດ້ຮັບແສງແດດໂດຍໃຫ້ມີຕາເວັນບັງເກີດຂຶ້ນ.

ໃນວັນທີ 4 ພຣະເຈົ້າຕັສສັ່ງໃຫ້ມີໜ່ວຍສວ່າງເກີດຂຶ້ນ2 ໜ່ວຍ, ຄືຕາເວັນແລະເດືອນ. ໃຫ້ໜ່ວຍໃຫຍ່ຄອບຄອງກາງເວັນສ່ວນໜ່ວຍນ້ອຍໃຫ້ຄອບຄອງກາງຄືນແລະໄດ້ຕັ້ງດາວຕ່າງໆໄວ້ໃນຟ້າອາກາດໃຫ້ສ່ອງສວ່າງ

ແກ່ແຜ່ນດິນໂລກ.ນີ້ຄືການຊົງປະທານຄວາມເຢັນແລະຄວາມຮ້ອນໃຫ້ດຸ່ນດ່ຽງເພື່ອຈະໃຫ້ພືດໄດ້ຮັບຊີວິດຈາກພະລັງງານແສງແດດແລະຄວາມຊຸ່ມເຢັນເພື່ອຊ່ອຍໃຫ້ພືດເຕີບໃຫຍ່ຂຶ້ນຖ້າມີແຕ່ແສງແດດແຕ່ບໍ່ມີຄວາມຊຸ່ມເຢັນພືດກໍຄົງຈະແຫ້ງຫ່ຽວຕາຍເຖິງຈະມີອາຫານອັນບໍຣິບູນກໍຕາມ.

ນັກວິທຍາສາດກ່າວຕາມຄວາມຈິງວ່າເດືອນເປັນບໍຣິວານຂອງໂລກ.ຖ້າເປັນດັ່ງນັ້ນໂລກກັບເດືອນອັນໃດເກີດກ່ອນກັນ,ຖ້າເດືອນເກີດກ່ອນໂລກກໍເຫັນວ່າເປັນການບັງເອີນເດືອນຈະບໍ່ມີຄວາມໝາຍແລະບໍ່ເປັນປໂຍດແກ່ໂລກແຕ່ຢ່າງໃດ. ບໍ່ມີສິ່ງໃດແນ່ນອນເຫມືອນພຣະຄັມພີເພາະວ່າເດືອນໄດ້ສ່ອງແສງເຂົ້າມາຍັງໂລກໂດຍສະເພາະເຈາະຈົງຊຶ່ງເປັນພຣະປະສົງຂອງພຣະເຈົ້າ.

ໃນວັນນີ້ພຣະເຈົ້າຊົງຕັສສັ່ງໃຫ້ມີໜ່ວຍສວ່າງເທິງທ້ອງຟ້າເພື່ອແບ່ງກາງເວັນອອກຈາກກາງຄືນໃຫ້ໜ່ວຍສວ່າງນັ້ນເປັນຜູ້ກຳນົດລະດູການ, ວັນ, ແລະປີນີ້ຄືພຣະຣາຊກິດອັນອັສຈັນຂອງພຣະເຈົ້າ.ເດືອນອວ່າຍໜ້າມາໃສ່ໂລກພຽງດ້ານດຽວແຕ່ໂລກໄດ້ອວ່າຍທຸກດ້ານໃສ່ເດືອນທຸກໆ 24 ຊົ່ວໂມງ. ເພື່ອໃຫ້ເປັນກຳນົດທີ່ມະນຸດຈະໄດ້ນັບການເວລາ,ອາຍຸ,ວັນ,ແລະປີຂອງຕົນໄດ້,ແລະລະດູການແຫ່ງດິນຟ້າອາກາດ,ພືດ,ແລະສັດກໍບັງເກີດຂຶ້ນມາຢ່າງເໝາະສົມ.

ວັນທີ 5 ຊົງນິຣະມິດສ້າງສັດນ້ຳໃນທະເລແລະສັດມີປີກໃນອາກາດຕາມຊະນິດຂອງມັນພຣະເຈົ້າຊົງຕັສສັ່ງກໍເປັນດັ່ງນັ້ນທີ່ຈິງເຮົາຈະສັງເກດເຫັນວ່າບັນດາສັດບົກຍັງບໍ່ໄດ້ນິຣະມິດໃນວັນນີ້ເລີຍຊຶ່ງເປັນພຣະດຳຣັດທີ່ຊຸກຊ້ອນຄວາມໝາຍໄວ້.ຖ້າຜູ້ບັນທຶກພຣະຄັມພີຂຽນຕາມຄວາມຄິດຂອງຕົນເອງລາວກໍຄົງຈະຂຽນວ່າສັດທັງໝົດໄດ້ຖືກນິຣະມິດສ້າງຂຶ້ນພ້ອມກັນໂດຍບໍ່ຍົກເວັ້ນແມ່ນແຕ່ໂຕດຽວແຕ່ປາກົດວ່າພຣະເຈົ້າໄດ້ໂຈະພຣະຣາຊກິດຂອງພຣະອົງໄວ້ຢ່າງເລິກລັບ. ຖ້າຜູ້ບັນທຶກພຣະຄັມພີຂຽນຂຶ້ນເອງລາວກໍຄົງຈະອ່ານກວດແກ້ໄຂໃໝ່ວ່າ ໂອ! ໄດ້ຂາດສັດບົກໄປແລ້ວລາວກໍຈະເພີ້ມສັດບົກໃສ່ໃຫ້ຄົບແຕ່ເປັນດ້ວຍເຫດໃດຈຶ່ງຍັງຄ້າງຄາໄວ້ເຊັ່ນນີ້.

ວັນທີ 6 ພຣະເຈົ້າຊົງຕັສສັ່ງໃຫ້ມີຝູງສັດທີ່ມີຊີວິດບັງເກີດຂຶ້ນໃນແຜ່ນດິນຄືສັດໃຊ້ງານສັດເລືອຄານສັດປ່າທັງປວງຕາມຊະນິດຂອງມັນ. ຕອນຕົ້ນຂອງວັນນີ້ພຣະເຈົ້າຊົງສ້າງສັດທັງໝົດ, ສັດສີ່ຂາ, ສອງຂາ,ແລະສັດເລືອຄານເຕັມແຜ່ນດິນ. ໃນວັນທີ 6 ນີ້ເປັນວັນອັນຍິ່ງໃຫຍ່ໃນພຣະຣາຊກິດຂອງພຣະເຈົ້າ ພຣະເຈົ້າຊົງຕັສສັ່ງວ່າໃຫ້ເຮົາສ້າງມະນຸດຕາມລັກສະນະຂອງເຮົາໃຫ້ເຂົາຄອບຄອງແຜ່ນດິນທົ່ວໄປແລະສາລະພັດໃນອາກາດ,ໃນທະເລ,ແລະໃນແຜ່ນດິນໂລກທັງໝົດ.

ນີ້ຄືສິດທິ, ອຳນາດ, ແລະກຽດຕິຍົດຂອງມະນຸດສຳລັບແຜ່ນດິນໂລກນີ້. ໃນພຣະທັມປະຖົມມະການບົດທີ 2 ຂໍ້7ພຣະເຈົ້າໄດ້ຊົງສ້າງມະນຸດດ້ວຍຂີ້ດິນແລ້ວເປົ່າລົມເຂົ້າທາງຮູດັງມະນຸດຈຶ່ງມີຊີວິດຊາຍຜູ້ນັ້ນຊື່ວ່າອາດາມແປວ່າຄົນຜູ້ຊາຍ. ນີ້ຄືຈຸດເລີ້ມຕົ້ນແຫ່ງຊີວິດຂອງມະນຸດແຕ່ລະພາກສ່ວນທີ່ມາຈາກພຣະເຈົ້າຄືທາດທັງ4ຊຶ່ງໄດ້ແກ່ດິນ, ນ້ຳ, ລົມ, ໄຟ. ທາດທັງ 4 ນີ້ບໍ່ໄດ້ຄິດທີ່ຈະມາຮວມກັນເອງເພື່ອຈະເກີດເປັນມະນຸດເພາະພວກມັນບໍ່ມີຄວາມຄິດຄວາມຮູ້ສຶກເອງໂດຍລຳພັງແຕ່ແມ່ນພຣະປະສົງຂອງພຣະເຈົ້າທີ່ຊົງນຳເອົາພວກມັນມາປະກອບເຂົ້າກັນ ດ້ວຍພຣະຫັດຂອງພຣະອົງເພື່ອໃຫ້ເປັນມະນຸດໂດຍສະເພາະເຈາະຈົງ.

ພຣະເຈົ້າຊົງກ່າວວ່າບໍ່ເປັນການສົມຄວນທີ່ໃຫ້ຜູ້ຊາຍຢູ່ໂດດດ່ຽວເຊັ່ນນີ້ ເຮົາຄວນຫາຜູ້ຊຶດຊ່ອຍທີ່ເໝາະສົມໃຫ້ລາວ.....ເມື່ອເປັນດັ່ງນັ້ນພຣະເຈົ້າຈຶ່ງຊົງເຮັດໃຫ້ຊາຍຜູ້ນັ້ນນອນຫລັບສນິດໃນຂນະທີ່ນອນຫລັບຢູ່ນັ້ນພຣະອົງເອົາກະດູກຂ້າງຊີກນຶ່ງຂອງລາວອອກມາແລ້ວຊົງໃຫ້ເນື້ອໜັງຈອດຕິດກັນດັ່ງເດີມ. ພຣະອົງເອົາກະດູກຂ້າງນັ້ນມາສ້າງເປັນຜູ້ຍິງເມື່ອສ້າງແລ້ວພຣະອົງກໍຊົງມອບຍິງນັ້ນໃຫ້ແກ່ລາວ. ທີ່ເອີ້ນວ່າຜູ້ຍິງນັ້ນກໍເພາະວ່າຜູ້ຍິງອອກມາຈາກຜູ້ຊາຍຍິງຄົນນັ້ນຊື່ວ່າເອວາແລະເປັນເຜົ່າພັນຂອງມະນຸດທີ່ມີຊີວິດສືບຕໍ່ກັນມາຈົນເທົ່າທຸກວັນນີ້.

ທ່ານຜູ້ອ່ານທີ່ປະກອບດ້ວຍສະຕິປັນຍາໂປດພິຈາຣະນາເບິ່ງວ່າຄວາມລະອຽດທີ່ກ່າວໄວ້ໃນພຣະຄັມພີຜູ້ຈົດບັນທຶກພຣະຄັມພີເອງບໍ່ສາມາດທີ່ຈະຂຽນຄວາມຈິງອັນອັສຈັນເຫລົ່ານີ້ໄດ້ແນ່ນອນ. ເພາະຜູ້ຈົດບັນທຶກພຣະຄັມພີກໍເປັນມະນຸດທັມມະດາສາມັນຄົນນຶ່ງ. ນີ້ແຫລະຄືການຊົງບັນດົນຈາກພຣະເຈົ້າ ຈຶ່ງໄດ້ເອີ້ນພຣະຄັມພີວ່າເປັນພຣະທັມ (ຄຳເວົ້າ)ຂອງພຣະເຈົ້າ. ການຊົງນິຣະມິດສ້າງໄດ້ເລີ້ມຕົ້ນຈາກຈັກກະວານແລະໄດ້ຈົບລົງທີ່ມະນຸດ.ບໍ່ເຄີຍມີໃນຄຳ

ສອນໃດໆທີ່ສາມາດລຳດັບການເກີດຂອງສາຣະພັດສິ່ງໄດ້ຢ່າງຖືກຕ້ອງເໝືອນກັບພຣະຄັມພີ.ບໍ່ມີວິທຍາສາດສາຂາໃດທີ່ກ່າວເຖິງລາຍລະອຽດເໝືອນຢ່າງພຣະຄັມພີນີ້ເລີຍ ແລະບໍ່ມີປື້ມຕຳຣາໃດກ່າວເປັນຖ້ອຍຄຳອັນເດັດຂາດແນ່ນອນໂດຍບໍ່ຢ້ານກົວວ່າຈະຖືກຕໍ່ສູ້,ຖືກລຶບລ້າງ,ນອກຈາກພຣະຄັມພີເທົ່ານັ້ນ. ເພາະວ່າພຣະຄັມພີເປັນຖ້ອຍຄຳຢືນຍັນອັນອຳມະຕະ.

ພຣະຄັມພີເປັນຄຳສອນທີ່ໃຫ້ຮູ້ເຖິງພຣະລັກສະນະຂອງພຣະເຈົ້າໂດຍພຣະອົງຊົງໄດ້ເປີດເຜີຍເພື່ອໃຫ້ມະນຸດໄດ້ຮູ້ຈັກກັບພຣະອົງແລະຊົງເປີດເຜີຍໃຫ້ມະນຸດຮູ້ເຖິງສັພສິ່ງທີ່ພຣະອົງໄດ້ຊົງສ້າງໃນຈັກກະວານອັນມີສ່ວນພົວພັນຊຶ່ງກັນແລະກັນ.ຊົງເປີດເຜີຍໃຫ້ຮູ້ເຖິງຄວາມເລິກລັບຊັບຊ້ອນແຫ່ງທັມມະຊາດອັນເກີນທີ່ມະນຸດຈະເຂົ້າໃຈໄດ້ແລະຊົງເປີດເຜີຍໃຫ້ມະນຸດຮູ້ຈັກຕົນເອງການກຳເນີດ,ເຊື້ອຊາດ, ເຜົ່າພັນພ້ອມທັງຄວາມຈິງຂອງຊີວິດອັນມີສ່ວນສັມພັນທີ່ມາຈາກພຣະເຈົ້າ.ຊົງເປີດເຜີຍໃຫ້ມະນຸດໄດ້ພົບພຣະອົງໂດຍທາງພຣະຄັມພີ.ຊົງເປີດເຜີຍໃຫ້ເຫັນເຖິງຄວາມຊົ່ວຊ້າເລວຊາມໃນຊີວິດຂອງມະນຸດເອງ.ຊົງເປີດເຜີຍໃຫ້ເຫັນເຖິງທາງແຫ່ງຄວາມພົ້ນຈາກຄວາມຜິດບາບຂອງມະນຸດ. ຊົງເປີດເຜີຍໃຫ້ເຫັນຈຸດປະສົງຂອງການເກີດມາເປັນມະນຸດ. ຊົງເປີດເຜີຍໃຫ້ເຫັນປາຍທາງຂອງມະນຸດ. ພຣະຄັມພີຊຶ່ງເປັນພຣະຄຳຂອງພຣະເຈົ້າໄດ້ກ່າວເຖິງເຣື່ອງຕ່າງໆໄວ້ຢ່າງກະຈ່າງແຈ້ງຕັ້ງແຕ່ຊົງສ້າງມະນຸດຂຶ້ນມາ. ພຣະຄັມພີເປັນຄຳຕັດສິນໃນບັນຫາທີ່ມະນຸດຖົກຖຽງກັນເຊັ່ນເຣື່ອງໂລກກົມ,ໂລກແບນ,ຊຶ່ງມະນຸດໄດ້ໂຕ້ຖຽງກັນຫວຸ້ນວາຍຢູ່ໃນຍຸກນີ້ງ.

ໃນພຣະຄັມພີພຣະເຈົ້າຊົງໄດ້ເປີດເຜີຍໄວ້ເພື່ອໃຫ້ເຫັນສະພາບຂອງໂລກວ່າເປັນຢູ່ຢ່າງໃດແລະມີລັກສະນະຢ່າງໃດກ່ອນທີ່ມະນຸດຈະຖົກຖຽງກັນ.ໃນຍຸກແຫ່ງການບັນທຶກພຣະຄັມພີນັ້ນຍັງບໍ່ມີບັນຫາຖົກຖຽງເຣື່ອງໂລກກົມຫລືແບນເທື່ອໂລກຈະມີລັກສະນະຫລືເປັນຢ່າງໃດກໍຍັງບໍ່ມີຜູ້ໃດຮູ້. ຄັນຕໍ່ມາໃນຍຸກມະນຸດດື້ດ້ານ ເຂົາເຈົ້າກໍເລີ້ມໂຕ້ຖຽງຄວາມຈິງທີ່ຂຽນໄວ້ໃນພຣະຄັມພີ. ເມື່ອມະນຸດບໍ່ເຊື່ອວ່າມີພຣະເຈົ້າຜູ້ຊົງສ້າງເຂົາເຈົ້າກໍບໍ່ຍອມເຊື່ອຖ້ອຍຄຳໃນພຣະຄັມພີວ່າເປັນຖ້ອຍຄຳຂອງພຣະເຈົ້າແລະກໍບໍ່ເຊື່ອຂໍ້ຄວາມທີ່ພຣະຄັມພີໄດ້ບັນທຶກໄວ້ນັ້ນນຳ.ບັນຫາຕ່າງໆ ໄດ້ເກີດຂຶ້ນຈາກພວກທີ່ອວດໂຕວ່າເປັນຜູ້ສລຽວສລາດ ບາງຄົນກໍພະຍາຍາມຄິດເຫດຜົນຂຶ້ນມາເພື່ອໃຫ້ຄົນອື່ນເຊື່ອຖືໃນຄວາມຄິດຂອງຕົນແລະເພື່ອຄັດຄ້ານພຣະຄັມພີຊຶ່ງແມ່ນພວກດຽວກັນກັບຊາລສ໌ດາຣ໌ວິນທີ່ເຊື່ອວ່າມະນຸດເກີດມາຈາກລິງ.

4,000 ປີຜ່ານມາແລ້ວພຣະທັມໂຢບບົດທີ26ຂໍ້7ໄດ້ເວົ້າເຖິງການກຳເນີດຂອງຈັກກະວານແລະໂລກວ່າ.ພຣະເຈົ້າຊົງພີທ້ອງຟ້າອອກສູ່ທາງທິດເໜືອແລະໄດ້ແຂວນແຜ່ນດິນໂລກເຮົາໄວ້ໃນບ່ອນທີ່ວ່າງເປົ່າ.ມະນຸດໃນຍຸກນັ້ນຢືນຢູ່ເທິງແຜ່ນດິນໂລກເຫັນແຕ່ນໍ້າສຸດຂອບຟ້າກໍເຂົ້າໃຈວ່າໂລກນີ້ຄົງຈະມີຮູບຮ່າງແບນຟູຢູ່ເທິງໜ້ານໍ້າ.ຄວາມຄິດຂອງຄົນອິນເດັຽບູກດຶກດຳບັນໄດ້ບັນທຶກໄວ້ວ່າໂລກນີ້ຢູ່ດ້ວຍການຄໍ້າຊູກັນໄວ້ເປັນຊັ້ນເຖິງ3 ຊັ້ນດ້ວຍກັນຄືລົມ, ນໍ້າ, ແຜ່ນດິນ, ລົມຄໍ້າຊູນໍ້າໄວ້, ແລະນໍ້າຄໍ້າຊູແຜ່ນດິນໄວ້.

ນີ້ເປັນຕົ້ນເຫດຂອງການໂຕ້ຖຽງກັນວ່າໂລກແບນຫລືກົມ ພວກທີ່ຄິດວ່າແຜ່ນດິນຟູຢູ່ເທິງໜ້ານໍ້າກໍເວົ້າວ່າໂລກແບນສ່ວນພວກທີ່ຫລຽວເບິ່ງຈາກແຄມຝັ່ງມະຫາສມຸດໄດ້ເຫັນຄວາມໂຄ້ງຂອງໜ້ານໍ້າກໍເວົ້າວ່າໂລກກົມ. ຄົນທັງສອງຈຳພວກນີ້ບໍ່ເຊື່ອພຣະເຈົ້າແລະບໍ່ເຊື່ອພຣະຄັມພີຊຶ່ງເປັນພຣະທັມຂອງພຣະເຈົ້າດ້ວຍ.ພຣະຄັມພີໄດ້ຢືນຢັນວ່າໂລກແຂວນຫ້ອຍຢູ່ກັບອາກາດບໍ່ຕິດກັບອັນໃດຕໍ່ມາອີກ745 ປີກ່ອນຄສ.ຊຶ່ງເປັນຍຸກແຫ່ງການໂຕ້ຖຽງກັນໄດ້ເລີ້ມຂຶ້ນອີກຄັ້ງນຶ່ງພຣະເຈົ້າຊົງແຈ້ງແກ່ມະນຸດໂດຍຜ່ານປາກຂອງທ່ານເອຊາຢາຜູ້ປະກາດພຣະທັມຂອງພຣະເຈົ້າ. ຊຶ່ງໄດ້ກ່າວເປັນປີສນາອອກມາໃຫ້ຄົນຂອງພຣະເຈົ້າເອງໄດ້ຮູ້ຈັກຄວາມຈິງຂໍ້ນີ້ແລະເພື່ອຄົນທັງໂລກຈະໄດ້ເຂົ້າໃຈເຣື່ອງຂອງໂລກທີ່ພຣະອົງໄດ້ຊົງສ້າງ. ທ່ານເອຊາຢາຈຶ່ງໄດ້ກ່າວດ້ວຍການດົນໃຈຈາກພຣະເຈົ້າໃນພຣະທັມເອຊາຢາບົດທີ 40 ຂໍ້ 22 ວ່າພຣະອົງຜູ້ຊົງປະທັບຢູ່ບັນລັງເທິງວົງກົມຂອງພິພົບ...(NIV)

ຜົນຈາກການພິສູດໂລກໃນຍຸກໃໝ່ນີ້ຍິ່ງເຮັດໃຫ້ພຣະຄັມພີກະຈ່າງແຈ້ງຂຶ້ນທຸກວັນ.ອີກບັນຫານຶ່ງນັ້ນແມ່ນຄົນຈຳນວນຫລາຍໄດ້ວາດມະໂນພາບຮ້ອຍແປດພັນປະການວ່າຈະມີສິ່ງນັ້ນສິ່ງນີ້ຢູ່ທີ່ເດືອນໃນວາຣະສຸດທ້າຍພຣະຄັມພີກໍໄດ້ພິສູດໃຫ້ເຫັນຢ່າງກະຈ່າງແຈ້ງອີກວ່າຢູ່ທີ່ເດືອນມີແຕ່ດິນກັບຫີນເທົ່ານັ້ນ.ພຣະຄັມພີກ່າວວ່າພຣະເຈົ້າຊົງສ້າງເດືອນໃຫ້ເປັນໜ່ວຍສວ່າງສ່ອງໃນເວລາກາງຄືນສຳລັບໂລກເທົ່ານັ້ນບໍ່ໄດ້ກ່າວວ່າມີສັດແລະພືດຢູ່ເທິງເດືອນແຕ່ຢ່າງໃດ.

ໃນຈັກກະວານຈະບໍ່ມີມະນຸດ,ສັດ,ແລະພືດໃນດາວໜ່ວຍອື່ນນອກຈາກໂລກນີ້ເທົ່ານັ້ນ.

ດັ່ງນັ້ນເຮົາຈະບໍ່ຖາມວ່າພຣະເຈົ້າມີຈິງຫລືເຮົາເບິ່ງພຣະເຈົ້າບໍ່ເຫັນດ້ວຍຕາຈຶ່ງບໍ່ຍອມເຊື່ອແມ່ນບໍ່? ເຖິງແມ່ນເຮົາຈະບໍ່ເຫັນພຣະເຈົ້າດ້ວຍຕາແຕ່ເຮົາກໍສາມາດເຫັນສີພຣະຫັດຂອງພຣະອົງທີ່ຊົງສ້າງໄວ້ແລະໄດ້ຮູ້ເຖິງພຣະດຳຣັດຕັສສັ່ງຂອງພຣະອົງໃນການຊົງສ້າງສັພສິ່ງທັງປວງໃນພຣະທັມໂຣມບົດທີ 1 ຂໍ້ 20-23 ກ່າວວ່າ "ຕັ້ງແຕ່ແຮກສ້າງໂລກມາສະພາບທີ່ບໍ່ປາກົດຂອງພຣະເຈົ້າຄືຣິດທານຸພາບອັນຖາວອນແລະຄວາມເປັນພຣະຂອງພຣະອົງກໍໄດ້ປາກົດແຈ້ງໃນສັພສິ່ງທີ່ພຣະອົງຊົງສ້າງສັນນັ້ນເຂົາທັງຫລາຍຈຶ່ງບໍ່ມີຂໍ້ແກ້ຕົວໄດ້.ເພາະເຖິງແມ່ນວ່າເຂົາທັງຫລາຍໄດ້ຮູ້ຈັກພຣະເຈົ້າແລ້ວເຂົາກໍບໍ່ໄດ້ຖວາຍກຽດແກ່ພຣະອົງໃຫ້ສົມກັບການຊົງເປັນພຣະເຈົ້າທັງບໍ່ໄດ້ໂມທະນາພຣະຄຸນແຕ່ວ່າຄວາມຄຶດຂອງເຂົາກາຍເປັນສິ່ງທີ່ເສັຽປໂຍດແລະໃຈໂງ່ຂອງເຂົາກໍມືດມົນໄປ.ເຂົາອ້າງຕົວວ່າເປັນຄົນສລາດເຂົາຈຶ່ງກາຍເປັນຄົນໂງ່ໄປ.ເຂົາໄດ້ເອົາຮູບມະນຸດຜູ້ຕາຍເປັນກັບຮູບນົກຮູບສັດສີ່ຕີນແລະສັດເລືອຄານມາປ່ຽນແທນສງ່າຣາສີຂອງພຣະເຈົ້າຜູ້ຊົງຕາຍບໍ່ເປັນ."

ພຣະຄັມພີເປັນສິ່ງທີ່ພິສູດວ່າພຣະເຈົ້າມີຈິງແລະໂດຍທາງພຣະຄັມພີນີ້ເຮັດໃຫ້ມະນຸດມີຊີວິດທີ່ສາມາດຈະສັມພັນແລະສັມຜັດກັບພຣະເຈົ້າໄດ້ແລະໂດຍທາງພຣະຄັມພີເຮັດໃຫ້ມະນຸດອ່ວາຍຄືນມາຫາພຣະເຈົ້າແລະເຮັດໃຫ້ມະນຸດໄດ້ຮັບຊີວິດໃໝ່.

ພຣະຄັມພີບອກເຖິງແຫລ່ງກຳເນີດຂອງຊີວິດແລະທັມມະຊາດໃນຈັກກະວານ.ພຣະຄັມພີມີຣິດອຳນາດທີ່ຈະນຳຄົນໃຫ້ສາມາດເຮັດຄວາມດີໄດ້ຊຶ່ງຕົນເອງບໍ່ສາມາດກະທຳໄດ້ເຊັ່ນອອກເຫລົ້າ, ອອກຢາ, ອອກການພະນັນ,ອອກຢາເສບຕິດ,ເຊົາລັກຂະໂມຍ,ບໍ່ລ່ວງປະເວນີຜົດຜົວເມັຽຄົນອື່ນ,ບໍ່ສໍ້ໂກງ,ຄົນທີ່ບໍ່ມີສິນທັມກາຍເປັນຄົນມີສິນທັມ, ຄົນດື້ຕໍ່ຄວາມບາບກາຍເປັນຄົນຢ້ານກົວບາບ,ຄົນບໍ່ຍຸດຕິທັມກາຍເປັນຄົນທ່ຽງທັມ,ຄົນໂຫດຮ້າຍທາຣຸນກາຍເປັນຄົນມີໃຈເມດຕາກະຣຸນາ,ຄົນເຫັນແກ່ໂຕກາຍເປັນຄົນອຸທິດຕົນເສັຽສະລະເພື່ອປໂຍດຂອງຄົນອື່ນ,ເປັນຄົນບໍ່ງົມງາຍໃນສິ່ງທີ່ໄຮ້ສາຣະປໂຍດ.

ພຣະຄັມພີຂຽນຂຶ້ນຢ່າງມີເປົ້າໝາຍບໍ່ແມ່ນສະຖານະການບັງຄັບໃຫ້ຂຽນແຕ່ພຣະຄັມພີໄດ້ບັງຄັບໃຫ້ສະຖານະການເປັນໄປຕາມທີ່ພຣະເຈົ້າໄດ້ຊົງສັ່ງໄວ້.ພຣະຄັມພີເປັນໜັງສືເຫລັ້ມທຳອິດຂອງໂລກທີ່ກ່າວເຖິງປະຫວັດສາດຂອງຈັກກະວານໂດຍທີ່ຜູ້ຂຽນເປັນມະນຸດທັມດາຊຶ່ງບໍ່ແມ່ນນັກວິທຍາສາດໃດໆທັງສິ້ນ. ແຕ່ພຣະຄັມພີກໍມີອິດທິພົນຕໍ່ໂລກທາງວິທຍາສາດຊຶ່ງບໍ່ມີຄຳສອນໃດໆມາລົບລ້າງໃຫ້ເສື່ອມສູນໄປໄດ້.

ພຣະຄັມພີໄດ້ບອກເຖິງການເວລາໃນອະນາຄົດຢ່າງບໍ່ມີຜິດພາດ.ພຣະຄັມພີເຮັດໃຫ້ເກີດຊີວິດໃໝ່ຂຶ້ນຄືຊີວິດທີ່ປ່ຽນແປງໃຫມ່ຊຶ່ງບໍ່ມີຕຳຣາໃດໆໃນໂລກເມື່ອອ່ານແລ້ວຈະເຮັດໃຫ້ຊີວິດໄດ້ຮັບການປ່ຽນແປງໃຫມ່. ພຣະຄັມພີບຳຣຸງຮັກສາຊີວິດດ້ານຈິດວິນຍານຖ້າປະຖິ້ມພຣະຄັມພີເມື່ອໃດຊີວິດດ້ານຈິດວິນຍານກໍຈະຫ່ຽວແຫ້ງລົງທັນທີເມື່ອວິນຍານຫ່ຽວແຫ້ງກໍເປັນຜົນສະທ້ອນຕໍ່ຊີວິດຝ່າຍເນື້ອຫນັງຮ່າງກາຍ.

ພຣະຄັມພີເປັນແສງສວ່າງແຫ່ງຊີວິດ. ໂລກໄດ້ມືດມົວໄປເພາະບໍ່ມີສິນທັມ, ໂລກຂາດຄວາມຊອບທັມ, ຂາດສະຕິປັນຍາ,ຂາດຄວາມຈິງ,ຕົກຢູ່ໃນຄວາມມືດຂອງຄວາມບາບເພາະຈິດວິນຍານຂອງມະນຸດຂາດພຣະຄັມພີອັນເປັນພຣະຄຳຂອງພຣະເຈົ້າ. ພຣະຄັມພີເປັນອາຫານທິບທີ່ເຮັດໃຫ້ຜູ້ທີ່ຮັບເອົາໄວ້ໃນໃຈມີຄວາມອີ່ມໃຈໂດຍທີ່ບໍ່ຕ້ອງໄປສແວງຫາຄຳຕອບສຳລັບບັນຫາຊີວິດແລະຄວາມຈິງຈາກຄຳສອນໃດໆອີກ.

ພຣະຄັມພີເຮັດໃຫ້ຈິດໃຈເຕັມລົ້ນຢູ່ສເມີຈິດໃຈທີ່ບໍ່ຮັບເອົາພຣະຄັມພີໄວ້ໃນໃຈຈະວ່າງເປົ່າເໝືອນບໍ່ມີສິ່ງໃດຢູ່ພາຍໃນຂໍ້ນີ້ທຸກຄົນບໍ່ສາມາດຈະຕອບຕົນເອງໄດ້ວ່າໃນໃຈຂອງຕົນບໍຣິບູນດ້ວຍສິ່ງໃດໃນເວລານີ້ ນອກຈາກຈະຄິດພາກພູມໃຈວ່າຕົນເອງມີຄວາມຮູ້, ມີປັນຍາ, ແຕ່ແທ້ຈິງແລ້ວຈິດໃຈມີແຕ່ຄວາມວ່າງເປົ່າ.ດ້ວຍເຫດຜົນແລະໂດຍທາງພຣະຄັມພີນີ້ແຫລະເຮົາຈະໄດ້ຮູ້ວ່າພຣະເຈົ້າມີຈິງ.

## 4.ຄວາມຈິງໃນຊີວິດຂອງມະນຸດພິສູດວ່າມີພຣະເຈົ້າ.

ມະນຸດມີຊີວິດ,ຊີວິດຕ້ອງມາຈາກສິ່ງທີ່ມີຈິດວິນຍານ.ທຸກສິ່ງຈະຕ້ອງມີບໍ່ເກີດ (ແຫລ່ງກຳເນີດ) ຈາກເຜົ່າພັນ ບໍ່ແມ່ນວ່າກ້ອນຫີນຈະວິວັທນາການກາຍເປັນຊ້າງໄດ້. ຕົ້ນໄມ້ຈະວິວັທນາການໄປເປັນລີງກໍບໍ່ໄດ້. ຊີວິດມາຈາກຫຍັງ? ມີໃຜແດ່ທີ່ຕອບໄດ້ຢ່າງຖືກຕ້ອງ?ບໍ່ມີເລີຍບາງຄົນຕອບແບບສິ່ງເດດບໍ່ຮູ້ວ່າຖືກຫລືຜິດ,ບາງຄົນກໍປະຕິເສດວ່າບໍ່ຮູ້,ຮູ້ພຽງແຕ່ວ່າມີຊີວິດຈິງຫາກແຕ່ບໍ່ຮູ້ວ່າຊີວິດມາຈາກໃສ,ເກີດຂື້ນເມື່ອໃດ,ອັນໃດເປັນຕົ້ນເຫດແຫ່ງຊີວິດນັ້ນ. ແມ່ນແຕ່ນັກວິທຍາສາດກໍພະຍາຍາມຄົ້ນຄວ້າເພື່ອຈະພົບກັບຄວາມຈິງຂອງຊີວິດ. ເຖີງຈະຄົ້ນຄວ້າຢ່າງໃດເຂົາເຈົ້າກໍພົບວ່າຊີວິດມາຈາກຊີວິດແລະຢູ່ໃນສິ່ງທີ່ມີຊີວິດທັງນັ້ນ. ນັກວິທຍາສາດສາຂາຊີວະວິທຍາໂດຍເອສເຕີອຣ໌ຍອຈມາຣ໌ກໄດ້ທຳການຄົ້ນຄວ້າຈົນສາມາດໃຫ້ຫລັກຖານແຫ່ງການສຶກສາໄວ້ວ່າເຊື້ອໂຕຜູ້ (ນໍ້າການ) ຈະເຂົ້າປະສົມໃນໄຂ່ໄດ້ພຽງຕົວດຽວເທົ່ານັ້ນໃນນິວເຄລັຽຂອງໄຂ່ຈະນຳລັກສະນະຊີວິດມາຈາກແມ່ແລ້ວມາຣ່ວມກັບເຊື້ອໂຕຜູ້ຊຶ່ງມີລັກສະນະມາຈາກພໍ່ແລະເຊື້ອສາຍເຊັ່ນດຽວກັນ.ນີ້ສະແດງໃຫ້ເຫັນວ່າເຊື້ອໂຕຜູ້ນັ້ນມີຊີວິດຢູ່ແລ້ວໂດຍສະເພາະການເຄື່ອນໄຫວຂອງເຊື້ອໂຕຜູ້ເຂົ້າໄປສູ່ໄຂ່ກໍບອກລັກສະນະວ່າເປັນສິ່ງທີ່ມີຊີວິດ.

ແຕ່ມາຣ໌ກເຂົ້າໃຈວ່າໄຂ່ທີ່ເປັນເປົ້ານີ້ງ (ບໍ່ເໜັງຕີງ) ເປັນລັກສະນະຊີວິດທີ່ມາຈາກແມ່ມາຣ໌ກອະທິບາຍວ່າເຊື້ອໂຕຜູ້ແຕ່ລະຄັ້ງມີປະຣິມານຫລາຍລ້ານໂຕຄຳທີ່ວ່າ<u>ໂຕ</u>ໃນທີ່ນີ້ເປັນສິ່ງບອກລັກສະນະຂອງສິ່ງທີ່ມີຊີວິດແລະໂຕໃດທີ່ມີກຳລັງຫລາຍກໍສາມາດເຂົ້າສູ່ນິວເຄລັຽ(ຮັງໄຂ່)ໄດ້ແລະກົນມະວິທີອັນອັສຈັນຂອງເຊື້ອໂຕຜູ້ອັນເປັນສິ່ງສະແດງເຖີງລັກສະນະຂອງຊີວິດຄືຮູ້ຈັກສແວງຫາເປົ້າຫມາຍຂອງຕົນແລະຮູ້ຈັກເປົ້າໝາຍທີ່ຕົນສແວງຫາເມື່ອພົບແລ້ວກໍດຳເນີນການດ້ວຍການຕັດຮອນຫາງຂອງຕົນອອກຊຶ່ງສະແດງໃຫ້ຮູ້ວ່າເຊື້ອໂຕຜູ້ໄດ້ພົບທີ່ໝາຍຂອງຕົນແລ້ວ.

ສລູບແລ້ວວິທຍາສາດກໍສາມາດພົບພຽງແຕ່ການເລີ້ມຕົ້ນສ້າງບ້ານເຮືອນຂອງຊີວິດເທົ່ານັ້ນ. ທ່ານປາສເຕີອຣ໌ນັກຊີວະວິທຍາບໍ່ໄດ້ເຊື່ອເລີຍວ່າສິ່ງທີ່ມີຊີວິດເກີດມາຈາກສິ່ງທີ່ບໍ່ມີຊີວິດ. ບາງຄົນກ່າວວ່າແມງຫິງຫ້ອຍເກີດມາຈາກຫຍ້າແຫ້ງຍິ່ງເປັນຄວາມຄິດທີ່ນ້າສົງສານແທ້ໆທີ່ລາວບໍ່ເຂົ້າໃຈວ່າແມງຫິງຫ້ອຍໄດ້ອອກໄຂ່ໄວ້ທີ່ຫຍ້າແຫ້ງເພາະວ່າແມງຫິງຫ້ອຍມັກຢູ່ໃນຫຍ້າແຫ້ງແລະເທິງຫນ້າດິນໃນລະດູແລ້ງ.

ວິທຍາສາດທາງດ້ານຊີວະວິທຍາອະທິບາຍວ່າຊີວິດຄືສິ່ງທີ່ຢູ່ພາຍໃນແຊນລ໌()ແລະກໍໄດ້ຮັບຄຳຕອບໃນທຳນອງດຽວກັນຄືມະນຸດແມ່ນຜູ້ທີ່ມີຢູ່ໃນບ້ານແຕ່ບໍ່ຕອບວ່າມະນຸດຄືຫຍັງ?ມາຈາກໃສ? ນັກວິທຍາສາດໄດ້ເຂົ້າໃຈເຖີງສິ່ງທີ່ເປັນມູນຖານຂອງຊີວິດອັນໄດ້ແກ່ສ່ວນປະກອບຂອງເຄມີວິທຍາໃນພວກທາດຕ່າງໆປະມານ20 ກວ່າຢ່າງເອີ້ນວ່າໂພໂຕພລາສຊຶມຄືອົອກຊີເຢນ,ຄາຣ໌ບອນ,ໄຮໂດຣເຢັນ,ໂປຣແຕັສຊຽມແລະຟອສຟໍຣັສທາດແທ້ທັ້ງ6 ຢ່າງນີ້ມີຢູ່ໃນສິ່ງທີ່ມີຊີວິດທັ້ງນັ້ນ.

ແລະຍັງມີທາດທີ່ມີຢູ່ທັງໃນສິ່ງທີ່ມີຊີວິດແລະບໍ່ມີຊີວິດດ້ວຍເຊັ່ນເຣດຽມ, ແຄລຊຽມ, ແຄລຽມ, ແມກນີຊຽມ, ໄອອອນ, ຄຣໍຣີນ, ແລະທາດອື່ນໆ ອີກນັກວິທຍາສາດກໍພຽງຍຶດເອົາໂພໂຕພລາສຊຶມວ່າເປັນພຽງມູນຖານຂອງຊີວິດເທົ່ານັ້ນເພາະແຕ່ລະທາດກໍບໍ່ມີຊີວິດໃນຕົວເອງແລະເມື່ອສິ່ງມີຊີວິດຕາມທີ່ເຮົາເອີ້ນກັນໄດ້ຕາຍໄປທາດເຫລົ່ານີ້ກໍຍັງມີຢູ່ຫາກແຕ່ບໍ່ມີຊີວິດທາດເຫລົ່ານີ້ຈະໂຮມກັນເຂົ້າເປັນຊີວິດເອງໄດ້ຢ່າງໃດ?

ຊີວິດບໍ່ມີຮູບ, ບໍ່ມີປະຣິມານ, ບໍ່ມີນໍ້າໜັກ, ແລະບໍ່ມີເນື້ອທີ່ແຕ່ເປັນສິ່ງທີ່ມີພະລານຸພາບ (ມີພະລັງ) ວິທຍາສາດບໍ່ສາມາດບອກໄດ້ວ່າຊີວິດຄືຫຍັງນັກປັຊຍາກໍບໍ່ສາມາດຈະຫາຄຳຕອບໄດ້ວ່າຊີວິດມາຈາກຫຍັງ. ຕັນກະວິທຍາແລະອັກສອນສາດກໍຍິ່ງຫ່າງໄກໄປຈາກຄຳຕອບນີ້ຫລາຍ.ແມ່ນແຕ່ນັກຈິດຕະວິທຍາເອງກໍບໍ່ສາມາດຈະຮູ້ໄດ້ວ່າຈິດໃຈຂອງຕົນເອງມີມູນເຫດມາຈາກຫຍັງ?

ທັງນີ້ກໍເພາະເຂົາເຈົ້າບໍ່ຍອມຮັບສິ່ງທີ່ເປັນມູນເຫດແຫ່ງຊີວິດຄືພຣະເຈົ້າແລະປະຕິເສດໃນຫລັກການທີ່ວ່າສິ່ງທີ່ມີຊີວິດຈະຕ້ອງມາຈາກສິ່ງທີ່ມີຊີວິດ.ເມື່ອບໍ່ຍອມຮັບຫລັກການນີ້ກໍບໍ່ຮູ້ວ່າຊີວິດມີຕົ້ນກຳເນີດມາຈາກໃສມະນຸດຈຶ່ງພະຍາຍາມຍຶດໝັ້ນຢູ່ໃນວັດຖຸທີ່ບໍ່ມີຊີວິດວ່າເປັນທີ່ມາຂອງຊີວິດເຖີງແມ່ນໂລກນີ້ຈະເຕັມໄປດ້ວຍວິທຍາການທີ່ຈະເຣີນກ້າວໜ້າກໍຕາມແຕ່ໂລກກໍຈະຈົນຕາແຈຕໍ່ຕົນເອງຄືຈະປະສົບກັບບັນຫາຊີວິດຢູ່ຕລອດເວລາຊຶ່ງຈະບໍ່ມີຄຳອະທິບາຍອັນໃດທີ່ຈົບລົງໂດຍປາສຈາກຄວາມສົງສັຍໄດ້ເລີຍ.

ແຕ່ເຄັດລັບແຫ່ງຊີວິດໄດ້ເປີດເຜີຍຢ່າງກະຈ່າງແຈ້ງຕັ້ງແຕ່ອະດີດມາແລ້ວໃນພຣະທັມອົບພະຍົບບົດທີ່ 3 ຂໍ້ 14 ກ່າວວ່າພຣະເຈົ້າຜູ້ຊົງພຣະນາມວ່າພຣະຜູ້ເປັນຢູ່ຄືຜູ້ຊົງເປັນຊີວິດເປັນຕົ້ນເຫດຂອງຊີວິດ.ພຣະເຈົ້າຊົງເປັນຊີວິດໂດຍພຣະອົງເອງພຣະອົງເປັນຜູ້ສ້າງຊີວິດ, ຊົງນິຣະມິດຈັກກະວານແລະໄດ້ຊົງປະທານຊີວິດໃຫ້ເກີດຂຶ້ນດ້ວຍທາດທັງ2 ທີ່ບໍ່ມີຊີວິດຄືດິນແລະນ້ຳອັນເປັນສ່ວນປະກອບໃນຮ່າງກາຍຂອງມະນຸດເຮົາໂດຍໃຫ້ເກີດເປັນຊີວິດຂຶ້ນໃນທາດທີ່ເປັນໂພໂຕພລາສຊຶມດ້ວຍການບັນຈຸໄຟທາດອຸນນະພູມແລະມີທາດອາກາດອົອກຊີເຢນເຂົ້າເປັນໂພໂຕພລາສຊຶມດ້ວຍຄຳສັ່ງໃຫ້ບັງເກີດເປັນຊີວິດ.

ດັ່ງເຣື່ອງທີ່ປາກົດຢູ່ໃນພຣະທັມປະຖົມມະການບົດທີ2 ຂໍ້ 7 ໄດ້ກ່າວເຖິງການຊົງສ້າງມະນຸດຄົນແຣກໃຫ້ມີຊີວິດບັງເກີດຂຶ້ນໃນໂລກຊຶ່ງເປີດເຜີຍເຖິງຕົ້ນກຳເນີດຂອງຊີວິດໄວ້ຢ່າງແຈ່ມແຈ້ງວ່າພຣະເຈົ້າຄືພຣະເຈົ້າຜູ້ຊົງເປັນຊີວິດຊົງສ້າງມະນຸດຂຶ້ນດ້ວຍຂີ້ດິນຊົງເປົ່າລົມແຫ່ງຊີວິດເຂົ້າທາງຮູດັງໃຫ້ມີຊີວິດຫາຍໃຈເຂົ້າອອກ ມະນຸດຈຶ່ງບັງເກີດເປັນວິນຍານແລະມີຊີວິດຢູ່ຈຶ່ງບໍ່ຕ້ອງສົງສັຍເລີຍວ່າຊີວິດຕ້ອງມາຈາກຊີວິດບໍ່ແມ່ນມາຈາກສິ່ງທີ່ບໍ່ມີຊີວິດ.ດັ່ງນັ້ນຊີວິດຈຶ່ງບໍ່ໄດ້ເກີດຂຶ້ນໂດຍບັງເອີນໂດຍປາສຈາກຈຸດມຸ້ງໝາຍແລະປາສຈາກຄວາມປະສົງ.

ຊີວິດນີ້ແຫລະທີ່ພິສູດໃຫ້ເຫັນຢ່າງກະຈ່າງແຈ້ງວ່າມີພຣະເຈົ້າຊຶ່ງເປັນເຫດຜົນທີ່ສຳຄັນຍິ່ງກວ່າເຫດຜົນໃດໆທັງສິ້ນ.

## 5.ຄວາມຈິງດ້ານຈິດວິນຍານຂອງຜູ້ທີ່ເຊື່ອໄດ້ພິສູດວ່າມີພຣະເຈົ້າ.

ຈິດວິນຍານຂອງຜູ້ເຊື່ອທີ່ໄດ້ຮັບປະສົບການຈາກພຣະເຈົ້າ,ໄດ້ສຳຜັດກັບພຣະເຈົ້າແລະໄດ້ພິສູດໃຫ້ເຫັນວ່າມີພຣະເຈົ້າ.

ໃນພຣະທັມໂຣມບົດທີ 1 ຂໍ້17-19 ກ່າວວ່າເພາະໃນຂ່າວປະເສີດນັ້ນ ພຣະເຈົ້າໄດ້ຊົງສະແດງໃຫ້ມີຄວາມຊອບທັມດ້ວຍອາສັຍຄວາມເຊື່ອແຕ່ສິ່ງດຽວ. ເຫມືອນມີຄຳຂຽນໄວ້ໃນພຣະຄັມພີແລ້ວວ່າ, ຜູ້ທີ່ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອຜູ້ນັ້ນແຫລະ,ຈະໄດ້ຊີວິດ.ດ້ວຍວ່າພຣະພິໂຣດຂອງພຣະເຈົ້າກໍປາກົດມາຈາກສວັນຕໍ່ສູ້ບັນດາຄວາມຫມິ່ນປມາດພຣະອົງແລະຄວາມຊົ່ວຮ້າຍທຸກຢ່າງຂອງມະນຸດ ຄືມະນຸດພວກນັ້ນທີ່ເອົາຄວາມຊົ່ວຮ້າຍມາຂັດຂວາງຄວາມຈິງ.ເຫດວ່າທີ່ຈະຮູ້ຈັກພຣະເຈົ້າໄດ້ເທົ່າໃດນັ້ນກໍໄດ້ປາກົດແຈ້ງຄັກໃນໃຈເຂົາດ້ວຍວ່າພຣະເຈົ້າໄດ້ຊົງໂຜດສະແດງໃຫ້ເຂົາຮູ້ແລ້ວ."

ພຣະທັມຂໍ້ນີ້ຊີ້ໃຫ້ເຫັນແຈ້ງວ່າຖ້າຜູ້ທີ່ເຊື່ອບໍ່ມີປະສົບການໃນຈິດໃຈຂອງຕົນແລ້ວຄວາມເຊື່ອກໍຫາປໂຍດບໍ່ໄດ້ລາວຈະກາຍເປັນທາດແຫ່ງຄວາມເຊື່ອຫລືເສບຕິດສາສນາໄປລ້າງເພາະຜູ້ເຊື່ອໃນພຣະເຈົ້າມີທຸກຊົນຊັ້ນ,ທຸກຊົນຊາດ,ຊຶ່ງທຸກຄົນທີ່ເຊື່ອກໍໄດ້ຢືນຢັນເຖິງຄວາມເຊື່ອນີ້ດ້ວຍເຫດຜົນສອງປະການຄື.

1.ສັມຜັດກັບພຣະເຈົ້າໂດຍທາງຄວາມພົ້ນເປັນປະສົບການທັງພາຍໃນຈິດໃຈແລະພາຍນອກ.

2.ຄຳອະທິຖານທີ່ໄດ້ຮັບຄຳຕອບຂອງຜູ້ທີ່ເຊື່ອໂດຍທີ່ພຣະເຈົ້າຊົງຕອບຄຳອະທິຖານ.

ການໄດ້ສັມຜັດກັບພຣະເຈົ້າໂດຍທາງຄວາມພົ້ນເປັນປະສົບການທີ່ມາຈາກພຣະເຈົ້າຖ້າຄວາມພົ້ນບໍ່ມີແກ່ຜູ້ທີ່ເຊື່ອຄວາມເຊື່ອກໍຈະເສື່ອມສລາຍຕາຍໄປທັນທີເພາະບໍ່ມີສິ່ງທີ່ຢືນຢັນໃຫ້ເຫັນວ່າມີພຣະເຈົ້າຜູ້ຊ່ວຍໃຫ້ພົ້ນໄດ້ແລະຄົງຈະມີພຽງແຕ່ຄຳວ່າສາສນາເຫມືອນສາສນາທົ່ວໆໄປຜູ້ທີ່ເຊື່ອທຸກຄົນໄດ້ຍຶດເອົາຫຼັກໃນຄວາມລອດພົ້ນເປັນຫລັກຖານອັນສຳຄັນຖ້າຄວາມລອດພົ້ນບໍ່ໄດ້ມາຈາກພຣະເຈົ້າກໍບໍ່ຈຳເປັນຈະຕ້ອງເຊື່ອພຣະເຈົ້າແລະເຊື່ອວ່າມີພຣະເຈົ້າ.

ຄວາມລອດພົ້ນທີ່ຜູ້ເຊື່ອໄດ້ຮັບນັ້ນມາຈາກພຣະເຈົ້າບໍ່ແມ່ນເຂົາເຈົ້າດີ້ນລົນຫລືພາກພຽນພະຍາຍາມກະທຳຄວາມດີເພື່ອຈະໄດ້ຄວາມລອດພົ້ນໂດຍເຮັດເອົາເອງແຕ່ເຂົາເຈົ້າກະທຳທຸກສິ່ງໂດຍເພິ່ງພຣະເຈົ້າຄວາມລອດພົ້ນບໍ່ແມ່ນຜົນຮັບທີ່ມາຈາກການກະທຳຄວາມດີ. ຂ້າພະເຈົ້າຜູ້ຂຽນກໍມີຄວາມຮູ້ແລະເຄີຍໄດ້ປະຕິບັດຕາມຄວາມເຂົ້າໃຈຂອງຕົນມາແລ້ວໃນສາສນາທີ່ເຄີຍນັບຖືມານອກຈາກມີຄວາມຮູ້ໃນຫລາຍໆສາສນາແລ້ວຂ້າພະເຈົ້າຍັງມີຄວາມຮູ້ໃນວິທຍາການຫລາຍສາຂາຊຶ່ງມີເຫດຜົນພຽງພໍທີ່ຈະປະຕິເສດພຣະເຈົ້າໄດ້ຢ່າງສິ້ນເຊີງແລະກໍເຄີຍໄດ້ປະຕິເສດພຣະເຈົ້າ

ແລະຕໍ່ສູ້ກັບພຣະອົງມາເປັນເວລາດົນນານເຖິງ35ປີຊຶ່ງຂ້າພະເຈົ້າໄດ້ສະແດງຕົວເປັນຄູ່ແຂ່ງກັບພຣະເຈົ້າຢ່າງເຂັ້ມແຂງຕລອດມາດ້ວຍເຫດຜົນ,ຄວາມຮູ້,ແລະຫລັກວິຊາການ.

ແຕ່ເຫດຜົນ, ຫລັກວິຊາການ, ແລະຄວາມຮູ້ໃນສາສນາທີ່ຂ້າພະເຈົ້າໃຊ້ເປັນກຳແພງຕໍ່ສູ້ກັບພຣະເຈົ້ານັ້ນບໍ່ໄດ້ຊ່ວຍຂ້າພະເຈົ້າລອດພົ້ນໄປຈາກອຳນາດຊົ່ວຮ້າຍທີ່ຄອບຄອງຊີວິດຂອງຂ້າພະເຈົ້າເລີຍ.ໃນຂະນະດຽວກັນນັ້ນຂ້າພະເຈົ້າຄິດວ່າຂ້າພະເຈົ້າເປັນຄົນມີເຫດຜົນຂ້າພະເຈົ້າຊໍ້າພັດກະທຳແລະນັບຖືໃນສິ່ງເຫລວໄຫລໄຮ້ເຫດຜົນຢູ່ຢ່າງສນິດໃຈເຊັ່ນການຂາບໄຫວ້ຜີ,ປີສາດ,ເຊື່ອໃນໂຊກຊາຕາແລະເຄາະເຂັນຕ່າງໆງົມງາຍໃນໄສຍະສາດແລະໝໍດູອັນເປັນຊີວິດຈິດໃຈ, ປະພຶດຕົວເປັນຄົນຊົ່ວ, ດື່ມສຸຣາຢາເມົາຈົນຕິດເປັນນິສັຍ, ມັກປະພຶດຊົ່ວໃນການລ່ວງປະເວນີຜິດຜົວເມັຽຄົນອື່ນ,ມີນິສັຍບໍ່ຊື່ສັດຕໍ່ເພື່ອນມະນຸດແລະໂດຍສະເພາະມັກທຳລາຍເພື່ອນມະນຸດດ້ວຍກັນ,ອັນເປັນສິ່ງທີ່ຂ້າພະເຈົ້າຄິດວ່າເປັນຄວາມຍຸດຕິທັມສຳລັບຕົນເອງ.ຄວາມຮູ້,ເຫດຜົນ,ແລະການປະຕິບັດທາງສາສນາກັບຄວາມໂຫດຮ້າຍທາຣຸນກໍຢູ່ຮ່ວມກັນໃນຕົວຂອງຂ້າພະເຈົ້າ.

ນີ້ຄືຜົນງານທີ່ຂ້າພະເຈົ້າໄດ້ຕໍ່ສູ້ກັບພຣະເຈົ້າມາເປັນເວລາດົນນານແລະມີຄົນທີ່ເປັນເຫມືອນຂ້າພະເຈົ້ານີ້ກໍມີຫລາຍເຖິງແມ່ນເຂົາເຈົ້າຈະມີຄວາມຮູ້,ມີຖານະທີ່ດີຫລາຍໆຢ່າງກໍຕາມ,ເຫດຜົນທີ່ເປັນເຄື່ອງມືຕໍ່ສູ້ກັບພຣະເຈົ້ານັ້ນບໍ່ໄດ້ຊ່ວຍໃຫ້ເຂົາເຈົ້າລອດພົ້ນໄປຈາກຄວາມຊົ່ວເຫລົ່ານີ້ເລີຍ.

ແຕ່ເມື່ອຂ້າພະເຈົ້າອ່ວາຍໜ້າມາຫາພຣະເຈົ້າໂດຍການຮັບເອົາອົງພຣະເຢຊູຄຣິດຜູ້ທີ່ເຄີຍເປັນສັດຕຣູໂຕຮ້າຍກາດຂອງຂ້າພະເຈົ້າຂ້າພະເຈົ້າກໍຫລຸດພົ້ນຈາກສິ່ງຊົ່ວຮ້າຍທີ່ກ່າວມານັ້ນໄດ້ໂດຍບໍ່ຕ້ອງລຳບາກໃຈໃນການຄົ້ນຄວ້າຫາເຫດຜົນອັນຫລວງຫລາຍແຕ່ຢ່າງໃດເລີຍ.

ຄວາມລອດພົ້ນຄືການຫລຸດພົ້ນຈາກອຳນາດຂອງຄວາມບາບແລະເປັນອິສຣະພາບຈາກຄວາມຊົ່ວຮ້າຍ.ເມື່ອມະນຸດຍັງບໍ່ໄດ້ຮັບຄວາມລອດພົ້ນມະນຸດກໍເປັນທາດຂອງຄວາມຜິດບາບທຸກຊະນິດເລີ້ມຕັ້ງແຕ່ທາດແຫ່ງຄວາມເຊື່ອທີ່ງົມງາຍ, ເຊື່ອໃນສິ່ງທີ່ໄຮ້ສາຣະປໂຍດ,ເຊື່ອພູດຜີປີສາດ,ຂາບໄຫວ້ນະມັສການວັດຖຸບໍ່ເລືອກຊະນິດ,ທາດແຫ່ງສຸຣາຢາເສບຕິດ, ທາດຂອງການບັນເທີງທາງໂລກນາໆຊະນິດ, ທາດແຫ່ງການພະນັນ, ແລະທາດແຫ່ງຄວາມຢ້ານກົວຕໍ່ເຫລົ່າວິນຍານຊົ່ວທັງຫລາຍ.

ອຳນາດແຫ່ງຄວາມບາບທີ່ເລິກເຊິ່ງຍິ່ງກວ່ານີ້ທີ່ຝັງຢູ່ພາຍໃນຊີວິດ ຈະໄດ້ຮັບການກຳຈັດປັດເປົ່າອອກໄປຢ່າງອັສຈັນໂດຍການເພິ່ງໃນພຣະເຈົ້າ.ດັ່ງນັ້ນຜູ້ທີ່ເຊື່ອໃນພຣະເຈົ້າໂດຍການຮັບເອົາອົງພຣະເຢຊູຄຣິດໄວ້ໃນໃຈລາວກໍຈະໄດ້ຮັບຄວາມລອດພົ້ນ. ການຮັບຊີວິດໃຫມ່ອັນເປັນຊີວິດນິຣັນຊຶ່ງບໍ່ແມ່ນຊີວິດທີ່ຫລອກລວງທັງຕົວເອງແລະຄົນອື່ນ. ຊີວິດໃຫມ່ຊີ້ໃຫ້ເຫັນຄວາມຈິງໃນຊີວິດນີ້ບໍ່ແມ່ນຊີວິດສຸ່ມດີສຸ່ມຮ້າຍອ່ອນໄຫວໄປຕາມຄວາມເຊື່ອຂອງຊາວໂລກທີ່ຮັກເຫດຜົນຊຶ່ງຄຽງຄູ່ກັບຄວາມເຫລວໄຫລທັງປວງ.

ປະສົບການດັ່ງກ່າວນີ້ຈະມີແກ່ທຸກຄົນທີ່ເຊື່ອໃນພຣະເຈົ້າແລະຮັບເອົາພຣະເຢຊູຄຣິດເປັນພຣະເຈົ້າຂອງຕົນແຕ່ອົງດຽວ.ຄວາມພົ້ນນີ້ເປັນປະສົບການທັງພາຍໃນແລະພາຍນອກບຸກຄົນທ່ານຈະໄດ້ຮັບປະສົບການນີ້ໄດ້ໃນດຽວນີ້, ໃນຂະນະນີ້ເມື່ອທ່ານເຊື່ອແລະວາງໃຈໃນພຣະເຈົ້າ ໂດຍຮັບເອົາອົງພຣະເຢຊູຄຣິດເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງທ່ານ. ນີ້ແຫລະຄືການຢືນຍັນວ່າມີພຣະເຈົ້າໂດຍທາງຊີວິດຂອງຜູ້ທີ່ເຊື່ອຄຳອະທິຖານທີ່ໄດ້ຮັບຄຳຕອບໂດຍພຣະເຈົ້າເປັນຜູ້ຕອບຄຳອະທິຖານກໍເປັນຫລັກຖານຢືນຢັນອີກຢ່າງນຶ່ງ. ຄຣິສຕຽນບໍ່ໄດ້ກ່າວຄຳອະທິຖານຕໍ່ພຣະເຈົ້າໂດຍວິທີຂອງຈິຕສາດຈິຕວິທຍາຫລືຫລັກການຂອງປັນຍາແຕ່ຢ່າງໃດທີ່ບັງເກີດຂຶ້ນດ້ວຍອຳນາດທາງຈິດ. ຄຣິສຕຽນອະທິຖານດ້ວຍຖ້ອຍຄຳທີ່ບໍ່ໄດ້ຕົກແຕ່ງແປງປັ້ນໃຫ້ເປັນບົດກອນອັນມ່ວນຊື່ນໃດໆ ທັງສິ້ນ. ແຕ່ເປັນຖ້ອຍຄຳທັມມະດາທີ່ເປັນຄວາມຈິງອັນເກີດຈາກຄວາມສຸກຫລືຄວາມທຸກພາຍໃນຈິດໃຈຂອງແຕ່ລະບຸກຄົນ ທີ່ອະທິຖານທູນຂໍຕໍ່ພຣະເຈົ້າ ຊຶ່ງເປັນການສົນທະນາຣະຫວ່າງຈິດວິນຍານຂອງມະນຸດກັບພຣະເຈົ້າໂດຍກົງ. ພຣະເຈົ້າຊົງຕອບຄຳອະທິຖານຫລາຍທາງບາງເທື່ອພຣະອົງຊົງຕອບເປັນສຽງຟັງດ້ວຍຫູໄດ້ຢ່າງແຈ່ມແຈ້ງ,ບາງເທື່ອຊົງຕອບດ້ວຍທາງຈິດວິນຍານພາຍໃນເປັນພາສາທີ່ເຮົາເຂົ້າໃຈໄດ້ຊຶ່ງເວົ້າຢູ່ໃນຈິດວິນຍານ,ບາງເທື່ອຊົງຕອບໂດຍວິທີທາງທັມມະຊາດເປັນສັນຍານ.

ພຣະເຈົ້າຊົງຕອບຄໍາອະທິຖານບໍ່ເລືອກເວລາ ບາງເທື່ອຊົງຕອບທັນທີໃນຂະນະທີ່ກໍາລັງອະທິຖານຢູ່, ບາງເທື່ອຊົງຕອບໃນຂະນະທີ່ເຮົາກໍາລັງເຮັດວຽກຢູ່ຫລືຮັບປະທານອາຫານຢູ່,ກໍາລັງອ່ານປື້ມຫລືກໍາລັງປະກອບທຸຣະກິດ, ຫລືໃນຂະນະທີ່ເຮົາກໍາລັງຄິດເປັນທຸກໃຈນໍາເຣື່ອງທີ່ກໍາລັງອະທິຖານຢູ່ນັ້ນ. ບາງເທື່ອຊົງຕອບໂດຍທາງຄວາມຝັນ, ບາງຄົນເຂົ້າໃຈວ່າເປັນຈິຕສາດ,ຈິຕສາດຂອງມະນຸດຈະຕອບຕົວເອງທີ່ເກີນຄວາມຄິດຂອງມະນຸດບໍ່ໄດ້ເພາະວ່າຈິຕສາດເປັນແຕ່ພຽງຄວາມນຶກຄິດຂອງມະນຸດນັ້ນເອງ.

ຈິຕສາດບໍ່ສາມາດຈະນໍາໃຫ້ມະນຸດລອດພົ້ນຈາກສິ່ງໃດໄດ້ເລີຍ ນັກຈິຕສາດເອງຍັງຊົ່ວຊ້າລາມົກຢູ່ຍັງຕິດເຫລົ້າ,ສູບຢາ,ຫລິ້ນການພະນັນ,ຍັງປະພຶດຢ່າງມະນຸດຢູ່.ນັກຈິຕສາດຍັງຫລົງວົນວາຍຢູ່ກັບຂະນົບທັມນຽມຕ່າງໆອັນໄຮ້ປໂຍດ ,ຍັງຂາບໄຫວ້ນະມັສການວິນຍານຊົ່ວແລະສິ່ງເຫລວໄຫລຊຶ່ງແມ່ນສິ່ງທີ່ສ້າງຂຶ້ນມາດ້ວຍມືຂອງຕົນເອງ, ຕາມມະໂນພາບ, ຕາມຄວາມຄິດ, ຕາມຈິນຕະນາການຂອງຕົນ. ຄວາມເຫລວໄຫລເຫລົ່ານີ້ນັກຈິຕສາດຍັງບໍ່ທັນໄດ້ຫລຸດພົ້ນເປັນອິສຣະພາບເທື່ອ.

## ເປັນຫຍັງມະນຸດຈຶ່ງຈໍາເປັນຕ້ອງກ່ຽວຂ້ອງກັບພຣະເຈົ້າ

ເມື່ອເຮົາຮູ້ແລ້ວວ່າມີພຣະເຈົ້າແລະຮູ້ວ່າພຣະອົງເປັນຜູ້ຊົງສ້າງມະນຸດຈຶ່ງຈໍາເປັນທີ່ມະນຸດຈະຕ້ອງກ່ຽວຂ້ອງກັບພຣະເຈົ້າ.ບໍ່ດັ່ງນັ້ນແລ້ວມະນຸດເຮົາກໍເປັນຄົນເນຣະຄຸນຕໍ່ພຣະເຈົ້າແລະເປັນກະບົດຕໍ່ສູ້ພຣະອົງ.ສິ່ງທີ່ສໍາຄັນແມ່ນມະນຸດຕ້ອງການຢາກລອດພົ້ນຈາກຄວາມທຸກອັນເປັນຜົນຂອງຄວາມບາບມະນຸດໄດ້ກະທໍາບາບທຸກຊະນິດທີ່ໃຈຕົນປາຖນາ. ເພາະທຸກຄົນເປັນຄົນບາບບໍ່ມີຈັກຄົນດຽວທີ່ບໍ່ເປັນຄົນບາບ.

ດັ່ງນັ້ນມະນຸດຈະເປັນຜູ້ພິພາກສາໃຫ້ຕົນເອງໄປນາຮົກຫລືສວັນໂດຍການກະທໍາຂອງຕົນເອງບໍ່ໄດ້. ບໍ່ມີການດີໃດໆໃນໂລກທີ່ຈະຍົກເອົາ(ລຶບລ້າງ)ຄວາມຜິດບາບອອກຈາກຊີວິດຂອງມະນຸດໄດ້ເພາະການພິພາກສາວິນຍານທັງປວງມາຈາກພຣະເຈົ້າເຮົາຈະລົງນາຮົກຫລືຂຶ້ນສວັນແມ່ນຂຶ້ນຢູ່ກັບຄໍາພິພາກສາຂອງພຣະເຈົ້າຜູ້ຊົງເປັນເຈົ້າຂອງທັງນາຮົກແລະສວັນ.ແຕ່ມະນຸດບໍ່ຮູ້ຈັກທີ່ມາຂອງຕົນເອງຈຶ່ງສແວງຫາທາງລອດພົ້ນໂດຍຄວາມຄິດຂອງຕົນເອງບໍ່ມີສາສນາໃດໆທີ່ຈະຊ່ວຍໃຫ້ມະນຸດລອດພົ້ນໄດ້ບໍ່ວ່າຈະພາກພຽນພະຍາຍາມກະທໍາດີໃນສາສນາໃດກໍຕາມກໍບໍ່ສາມາດລອດພົ້ນໄດ້ແມ່ນຄົນທີ່ນັບຖືສາສນາຄຣິດກໍບໍ່ລອດພົ້ນເຊັ່ນດຽວກັນ.

ໃນພຣະທັມກິຈການບົດທີ 4 ຂໍ້ 12 ກ່າວວ່າມະນຸດບໍ່ລອດພົ້ນເພາະນັບຖືສາສນາມີທາງດຽວທີ່ມະນຸດຈະພົ້ນຈາກບາບໄດ້ແລະບໍ່ຕ້ອງຕົກນາຮົກກໍຄືພຣະເຈົ້າຊົງຍົກຄວາມຜິດບາບທີ່ລາວຈະໄປຊົດໃຊ້ໜີ້ກັມໃນນາຮົກໃຫ້ເທົ່ານັ້ນສະນັ້ນຈຶ່ງຈໍາເປັນທີ່ມະນຸດທຸກຄົນຈະຕ້ອງອ່ວຍມາຫາພຣະເຈົ້າ.ການອ່ວຍມາຫາພຣະເຈົ້າທີ່ຖືກຕ້ອງທີ່ຈະໄດ້ຮັບຄວາມລອດພົ້ນນັ້ນ ຄືຕ້ອງມາທາງພຣະເຢຊູຄຣິດຜູ້ເປັນປະຕູແຫ່ງສວັນ ຖ້າໃຜຄົນນຶ່ງເຊື່ອໃນພຣະເຈົ້າຮ້ອຍເປີເຊັນແຕ່ປະຕິເສດພຣະເຢຊູຄຣິດກໍຈະບໍ່ສາມາດໄປເຖິງພຣະເຈົ້າໄດ້. ເພາະພຣະເຈົ້າຊົງແຕ່ງຕັ້ງອົງພຣະເຢຊູຄຣິດໄວ້ສໍາຫລັບກິຈການຂອງພຣະອົງເພື່ອໄຖ່ບາບຂອງມະນຸດ.

ໃນພຣະຄັມພີໂຢຮັນບົດທີ3 ຂໍ້16 ກ່າວວ່າເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈໃນພຣະບຸດນັ້ນຈະບໍ່ຈິບຫາຍແຕ່ມີຊີວິດອັນຕລອດໄປເປັນນິດຄືບໍ່ຕ້ອງຕົກນາຮົກແຕ່ໄດ້ໄປສວັນໂດຍທາງພຣະເຢຊູຄຣິດ.

ໃນພຣະທັມກິຈການບົດທີ4ຂໍ້12ກ່າວວ່າໃນຜູ້ອື່ນຄວາມລອດພົ້ນບໍ່ມີດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າຊຶ່ງຊົງປະທານແກ່ມະນຸດເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນຖ້ອຍຄໍານີ້ມີຄວາມຫມາຍວ່າ "ຄວາມລອດພົ້ນ "ບໍ່ມີຢູ່ໃນສາສນາໃດໆໃນໂລກແຕ່ມີຢູ່ໃນອົງພຣະເຢຊູຄຣິດພຽງອົງດຽວເທົ່ານັ້ນ. ຄໍານີ້ເປັນຖ້ອຍຄໍາໜັກແໜ້ນຖ້າມກາງມະນຸສໂລກຖ້າບໍ່ເປັນຄວາມຈິງກໍຄົງຈະບໍ່ກ່າວໄວ້ໃນພຣະຄັມພີ.

## ຫລັກສຳຄັນແຫ່ງການຮັບເອົາຄວາມລອດພົ້ນ

ປະການທີ່ນຶ່ງທ່ານຈະຕ້ອງຍອມຮັບດ້ວຍຄວາມຈິງໃຈວ່າ ທ່ານເປັນຄົນບາບຖ້າເຮົາວ່າເຮົາບໍ່ມີບາບເຮົາກໍຫລອກລວງຕົນເອງ. "ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ" (ໂຣມ 3:23).

ປະການທີສອງມີຄວາມເສັຽໃຈທີ່ຕົນເປັນຄົນບາບຈຶ່ງອອ່ນຍຫນີຈາກຄວາມຜິດບາບທຸກຊະນິດທີ່ຕົນນິຍົມຊົມຊອບມາແຕ່ເດີມແລ້ວຕັ້ງໃຈຕ້ອນຮັບເອົາອົງພຣະເຢຊູຄຣິດມາເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ.

ປະການທີສາມໃນຖານະເປັນຄົນຜິດບາບສາຣະພາບດ້ວຍປາກຕໍ່ພຣະເຈົ້າເຖິງຄວາມຜິດບາບທີ່ຕົນໄດ້ກະທຳມາແລ້ວຖ້າເຮົາສາຣະພາບຄວາມບາບຂອງເຮົາພຣະອົງຊົງສັດຊື່ແລະທ່ຽງທັມກໍຈະຊົງຍົກບາບຂອງເຮົາແລະຈະຊົງຊຳຣະເຮົາໃຫ້ພົ້ນຈາກການອະທັມທັງສິ້ນ1ໂຢຮັນ1:9.

ປະການສຳຄັນຄືການກັບໃຈໃຫມ່ (ຖິ້ມໃຈເກົ່າເອົາໃຈໃຫມ່) ຈາກຄວາມຜິດບາບແລະຮັບເອົາອົງພຣະເຢຊູຄຣິດເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ.ການບັງເກີດໃຫມ່ຝ່າຍຈິດວິນຍານໃນອົງພຣະເຢຊູຄຣິດເປັນຫນ້າທີ່ຂອງພຣະເຈົ້າທີ່ຈະຊົງປະທານໃຫ້ເຮົາເປັນຜູ້ທີ່ມີຊີວິດໃຫມ່,ເປັນຄົນໃຫມ່. ຄວາມຮູ້ສຶກ, ຄວາມຄິດ, ການປະພຶດ,ແລະທັສນະຄະຕິໃຫມ່ຈະເກີດຂຶ້ນເປັນລຳດັບ. ທ່ານຈະຖືກຍ້າຍເຂົ້າໄປສູ່ພຣະຣາຊອານາຈັກຂອງພຣະເຈົ້າເປັນບຸດຂອງພຣະອົງລອດພົ້ນຈາກຄວາມເປັນທາດຂອງມານຕັ້ງແຕ່ເວລານັ້ນ.

ມະນຸດຈະລອດພົ້ນໄດ້ກໍຕໍ່ເມື່ອຄວາມຜິດຄວາມບາບໄດ້ຮັບການໃຫ້ອະພັຍເທົ່ານັ້ນ.ມະນຸດເຮົາມີຄວາມທຸກກໍຍ້ອນມີຄວາມບາບເປັນສາຍເຫດບໍ່ແມ່ນຍ້ອນມີຕັນຫາມີຄວາມທະເຍີທະຍານແລະມີຄວາມຢາກໄດ້ແມ່ນແຕ່ແອນ້ອຍທີ່ຢູ່ໃນທ້ອງແມ່ຫລືເກີດໃຫມ່ກໍມີທຸກໄດ້ ເຖິງຈະບໍ່ມີຕັນຫາໃດໆທັງສິ້ນຊຶ່ງແມ່ນຜົນແຫ່ງຄວາມບາບຕາມສາຍເລືອດອັນສືບເນື່ອງມາແຕ່ອາດາມແລະເອວາຜູ້ເປັນພໍ່ເຖົ້າແມ່ເດີມຄູ່ທຳອິດຂອງມະນຸດທີ່ໄດ້ກະທຳຜິດບາບ ຊຶ່ງເປັນຕົ້ນເຫດແຫ່ງຄວາມທຸກທັງປວງ.

ເປົ້າຫມາຍສຳຄັນຍິ່ງໃຫຍ່ຂອງການເຊື່ອແລະປະຕິບັດສາສນາກໍເພື່ອຈະໃຫ້ລອດພົ້ນຈາກຄວາມບາບແລະຄວາມທຸກບໍ່ແມ່ນນັບຖືປະຕິບັດສາສນາແບບເຜີນໆ,ງ່າຍໆ,ຕາມຄວາມສະດວກໃຈ,ຕາມໂອກາດອຳນວຍ,ໂດຍປາສຈາກເປົ້າຫມາຍ.

ຄຳຕອບອັນຍິ່ງໃຫຍ່ທີ່ສຸດຖ້າມກາງບັນດາມະນຸດຊາດກໍມີຄຳຕອບຢູ່ແລ້ວໃນຖ້ອຍຄຳທີ່ວ່າເຊື່ອແລະໄວ້ວາງໃຈໃນອົງພຣະເຢຊູຄຣິດແລ້ວທ່ານຈະລອດພົ້ນ.

## ໃນສາສນາອື່ນບໍ່ມີຄວາມລອດພົ້ນຫລື?

ບາງຄົນອາດຈະມີຄວາມເຫັນວ່າໃນສາສນາອື່ນບໍ່ມີຄວາມລອດພົ້ນຫລືແທ້ຈິງແລ້ວແມ່ນແຕ່ສາສນາຄຣິດກໍຊ່ວຍໃຫ້ຄົນລອດພົ້ນຈາກຄວາມບາບບໍ່ໄດ້ເຫມືອນກັນ. ເຖິງແມ່ນເຮົາຈະຮຽນຮູ້ຄຣິສຕະສາສນາຢ່າງຫລວງຫລາຍພຽງໃດ, ເຖິງແມ່ນເຮົາຈະປະຕິບັດຕາມຄຳສອນເທົ່າໃດກໍຊ່ວຍເຮົາໃຫ້ລອດພົ້ນບໍ່ໄດ້ ແລະຍັງມີຄຳຖາມອີກວ່າແລ້ວເຮົາຈະລອດພົ້ນໄດ້ຢ່າງໃດ?ຫລືຖ້າບໍ່ລອດພົ້ນຈຳເປັນຫຍັງຈຶ່ງຕ້ອງເຊື່ອ?

ພຣະເຢຊູຄຣິດຊົງວາງຫລັກຂອງຄວາມຈິງໄວ້ບໍ່ແມ່ນຄວາມຈິງຂອງຄວາມຮູ້ຫລືການປະຕິບັດຂອງບຸກຄົນ. ຫລັກຄວາມຈິງນັ້ນແມ່ນຈົ່ງກັບໃຈໃຫມ່ຈາກຄວາມຜິດບາບແລ້ວຮັບເອົາອົງພຣະເຢຊູຄຣິດເປັນພຣະຜູ້ຊ່ອຍໃຫ້ລອດພົ້ນແລ້ວທ່ານຈະລອດພົ້ນໄດ້.

ພຣະເຢຊູຄຣິດບໍ່ແມ່ນຄຳສອນ,ບໍ່ແມ່ນສາສນາ,ຊົງເປັນພຣະອົງເອງໃນສະພາບບຸກຄົນຊຶ່ງໃນປັດຈຸບັນນີ້ພຣະອົງຍັງຊົງພຣະຊົນຢູ່ຄືຍັງມີຊີວິດຢູ່ຊົງເປັນຢູ່. ທ່ານສາມາດຕິດຕໍ່ແລະສັມຜັດກັບພຣະອົງໄດ້.ຫຼາຍຄົນຈະເຊື່ອງ່າຍໃນ

ເຣື່ອງຄວາມຕາຍ  ຈຶ່ງເຫັນພາບຂອງພຣະເຢຊູສິ້ນສຸດລົງຢູ່ແຕ່ພຽງໄມ້ກາງແຂນອີກຫລາຍຄົນຈະບໍ່ເຊື່ອເຣື່ອງການຄືນມາຈາກຕາຍຂອງພຣະເຢຊູບໍ່ເຊື່ອວ່າພຣະອົງໄດ້ສະເດັດອອກຈາກອູບໂມງໄປຍັງເຫລືອໄວ້ແຕ່ຄວາມວ່າງເປົ່າບໍ່ເຊື່ອວ່າພຣະອົງປາກົດໃຫ້ສາວົກແລະຄົນ500ຄົນເຫັນບໍ່ເຊື່ອວ່າພຣະອົງສະເດັດກັບຄືນສູ່ສວັນ. ແຕ່ຫລັກຖານຂໍ້ພິສູດໄດ້ກ່າວໄວ້ໃນພຣະຄັມພີຢ່າງແຈ່ມແຈ້ງ.  ຖ້າຈະລອດພົ້ນດ້ວຍການປະຕິບັດຕາມສາສນາຕາມກຳລັງຄວາມສາມາດຂອງມະນຸດແລ້ວບໍ່ມີໃຜລອດພົ້ນໄດ້ແມ່ນແຕ່ຄົນດຽວພຽງແຕ່ພາກັນເສັຽເວລາໃນການປະຕິບັດສາສນາລ້າງໆເພາະວ່າຜູ້ປະຕິບັດທຸກຄົນກໍຮູ້ຢູ່ແກ່ໃຈຂອງຕົນແລ້ວວ່າຕົນຍັງມີບາບຢູ່ໃນໃຈອີກຢ່າງຫລວງຫລາຍເຖິງແມ່ນຮ່າງກາຍຈະຖືກບັງຄັບໃຫ້ຢູ່ໃນກົດເກນຂອງສາສນາແຕ່ບາບກໍຍັງຄົງມີຢູ່ພາຍໃນເພາະພຣະເຢຊູຄຣິດກ່າວວ່າຮ່າງກາຍຂອງເຮົາເປັນເຫມືອນຫລຸມຝັງສົບຄືມັນເອົາສາສນາເປັນສິ່ງປິດບັງຄວາມຊົ່ວພາຍໃນໃຈໄວ້ບໍ່ໃຫ້ຜູ້ໃດຮູ້ວ່າມີສິ່ງທີ່ເປັນເຫມືອນຊາກສົບຝັງຢູ່ທາງໃນແທ້ຈິງແລ້ວຍັງມີຄວາມບາບເຕັມຢູ່ຊຶ່ງປິດບັງໄວ້ດ້ວຍຄວາມປະພຶດທີ່ບໍ່ມີຜູ້ໃດສາມາດເຫັນໄດ້.  ແລະອີກປະການນຶ່ງສາສນາໃນໂລກມີຢູ່ຢ່າງຫລວງຫລາຍ  ຊຶ່ງລ້ວນແຕ່ສແວງຫາຄວາມລອດພົ້ນດ້ວຍວິທີການຕ່າງໆ ທີ່ຄົນຄິດຂຶ້ນມາເອງແລ້ວກໍພາກັນປະຕິບັດເຫມືອນກັບວ່າສວັນນາຣົກເປັນກັມມະສິດຂອງແຕ່ລະສາສນາໃຜລາວຊຶ່ງໄດ້ສົມມຸດຂຶ້ນດ້ວຍສາສນາຂອງຕົນເອງ.

ຫລັກຄວາມຈິງທີ່ຂ້າພະເຈົ້າໄດ້ກ່າວມາຕັ້ງແຕ່ຕົ້ນແລ້ວວ່າພຣະເຈົ້າເປັນຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກຣວມທັງການຊົງສ້າງມະນຸດດ້ວຍ.ມະນຸດໄດ້ອ່າຍຫນີຈາກພຣະເຈົ້າໄປສແວງຫາທີ່ເພິ່ງໃຫມ່ດ້ວຍຕົນເອງແລ້ວກໍພາກັນສ້າງຕັ້ງສາສນາຂຶ້ນ.  ຄຳພິພາກສາທີ່ຈະໃຫ້ມະນຸດລົງນາຣົກຫລືຂຶ້ນສວັນນັ້ນແມ່ນມາຈາກພຣະເຈົ້າບໍ່ໄດ້ມາຈາກສາສນາໃດໆທັງສິ້ນ.ການອະພັຍໂທດບາບແກ່ຈິດວິນຍານທີ່ກັບໃຈໃຫມ່ຄືຜູ້ທີ່ອ່າຍມາຫາພຣະເຈົ້າກໍເນື່ອງຈາກວ່າພຣະເຈົ້າຊົງຍົກຄວາມຜິດບາບຂອງລາວແລ້ວຈຶ່ງເປັນຈິດວິນຍານທີ່ພຣະຄຣິດຊົງຊຳຣະລ້າງແລ້ວ,  ບັນຊີຫນີ້ບາບຂອງຄົນນັ້ນໄດ້ຖືກຊຳຣະຈ່າຍແລ້ວໂດຍພຣະຄຣິດ.

ວິນຍານທຸກດວງຈະຕ້ອງໃຫ້ປາກຄຳຕໍ່ພຣະພັກພຣະເຈົ້າເພື່ອຮັບໂທດແລະຮັບການອະພັຍໂທດຈະບໍ່ມີຄົນໃນສາສນາໃດໆໄປທຳຕົວເປັນຕຸລາການເປັນຜູ້ພິພາກສາຄວາມຜິດຂອງຄົນໃນສາສນາຂອງຕົນໄດ້.

ດັ່ງນັ້ນຄວາມລອດພົ້ນຈຶ່ງບໍ່ໄດ້ມາຈາກສາສນາໃດໆເລີຍແຕ່ໄດ້ມາໂດຍທາງພຣະເຢຊູຄຣິດພຣະຜູ້ຊ່ວຍໃຫ້ລອດພົ້ນຂອງໂລກພຽງຜູ້ດຽວ.  ພຣະເຢຊູບໍ່ແມ່ນຄຳສອນ, ຫລືບໍ່ແມ່ນສາສນາແຕ່ພຣະອົງຊົງເປັນຜູ້ຍົກໂທດຄວາມຜິດບາບໃຫ້ແກ່ທ່ານເມື່ອທ່ານກັບໃຈໃຫມ່ຈາກຄວາມບາບແລະຕ້ອນຮັບເອົາພຣະອົງເຂົ້າມາຢູ່ໃນຊີວິດຈິດໃຈຂອງທ່ານ.ແຕ່ຢ່າເຂົ້າໃຈວ່າການຮັບເອົາສາສນາຫລືເຊື່ອໃນສາສນາຄຣິດຈະລອດພົ້ນ.

ພຣະເຈົ້າເປັນພຣະບິດາຂອງມະນຸດທຸກຊາດທຸກສາສນາພຣະເຢຊູເປັນພຣະບຸດຂອງພຣະເຈົ້າເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງໂລກບໍ່ແມ່ນເປັນສາສນາຂອງໂລກເຫມືອນພຣະບິດາຂອງເຮົາທີ່ບໍ່ແມ່ນຄຳສອນ.ດັ່ງນັ້ນພຣະເຢຊູຈຶ່ງບໍ່ແມ່ນສາສນາແຕ່ຊົງເປັນພຣະຜູ້ຊ່ວຍໃຫ້ມະນຸດລອດພົ້ນດ້ວຍພຣະກະຣຸນາຂອງພຣະອົງ.

ພຣະເຢຊູຊົງສັ່ງໄວ້ໃນພຣະທັມໂຢຮັນບົດທີ12ຂໍ້46ວ່າເຮົານີ້ຄືຄວາມສວ່າງໄດ້ເຂົ້າມາໃນໂລກເພື່ອທຸກຄົນທີ່ເຊື່ອໃນເຮົາຈະບໍ່ຕັ້ງຢູ່ໃນຄວາມມືດ."

ທ່ານຜູ້ອ່ານທີ່ຮັກແພງຖ້າຫາກທ່ານມີຄວາມສົນໃຈຢາກຮູ້ເຣື່ອງພຣະເຈົ້າຫລືເຣື່ອງຂອງອົງພຣະເຢຊູຄຣິດເພີ້ມເຕີມກະຣຸນາສະລະເວລາອັນມີຄ່າຂອງທ່ານໄປຢ້ຽມຢາມຄຣິສຕະຈັກ,ຫລືວິຫານ,ຫລືໂບດທີ່ບ້ານ,ຄຸ້ມ,ເມືອງທີ່ທ່ານອາສັຍຢູ່ທີ່ເຊື່ອແລະຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ   "ເພື່ອເພາະພຣະນາມນັ້ນທຸກຫົວເຂົ່າໃນສວັນ,ເທິງແຜ່ນດິນໂລກ,ແລະໃຕ້ພື້ນດິນກໍດີ,ຈະຄຸລົງຂາບພຣະເຢຊູເພື່ອທຸກລີ້ນຈະຍອມຮັບວ່າພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ..."(ພຣະທັມກິຈການ10:36;ໂຣມ10:9;1ໂກຣິນໂທ9:1;12:4;15:31;ຟີລິບປອຍ2:10-11)ແລ້ວທ່ານຈະໄດ້ພົບກັບຄຳຕອບແລະພົບກັບຄວາມຈິງເພີ້ມເຕີມອີກຢ່າງແນ່ນອນ.

(ຮຽບຮຽງຈາກພຣະເຈົ້າມີຈິງຫລື? ຊານໄຊປານ)

ຂໍພຣະເຈົ້າຊົງອວຍພຣະພອນແກ່ທ່ານ
ລາວບັບຕິສສັມພັນ